# ຫລັກຈັນຍາບັນເພື່ອການຄຸ້ມຄອງທີ່ດີ ດ້ານການຢາ ຂອງ ສ.ປ.ປ ລາວ

# Ethical Framework for Good Governance in the Pharmaceutical Sector, in Lao PDR

ກັນຍາ 2010

# ຫລັກຈັນຍາບັນເພື່ອການຄຸ້ມຄອງທີ່ດີ ດ້ານການຢາ ຂອງ ສປປ ລາວ

ກັນຍາ 2010

# ຄຳນຳ

ຫລັກຈັນຍາບັນເພື່ອການຄຸ້ມຄອງທີ່ດີ ດ້ານການຢາ ຂອງ ສປປ ລາວ ສະບັບນີ້ເປັນຄູ່ມືສະບັບທຳອິດສະບັບໜຶ່ງ ທີ່ກະຊວງສາທາລະນະສຸກໄດ້ສ້າງຂື້ນ ໂດຍອີງໃສ່ຄູ່ມືຂອງ ອົງການອະນາໄມໂລກເປັນຫລັກ, ເຊິ່ງແມ່ນ ກົມອາຫານ ແລະ ຢາ ເປັນໃຈກາງໃນການຄົ້ນຄວ້າ, ໄດ້ຜ່ານຄະນະກຳມະການຈັນຍາບັນ ພາຍໃນກະຊວງສາທາລະນະສຸກ ແລະ ໄດ້ຜ່ານກອງປະຊຸມຄົ້ນ ຄວ້າປະກອບຄຳເຫັນຫລາຍຄັ້ງ.

ດ້ວຍຄວາມເປັນຫ່ວງເປັນໃຍຂອງພັກ-ລັດຖະບານຕໍ່ການປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນລາວບັນດາເຜົ່າ ໂດຍສະເພາະການນຳໃຊ້ຢາດີມີຄຸນນະພາບ, ມີຄວາມປອດໄພ ແລະ ລາຄາສົມເຫດສົມຜົນຕາມນະໂຍບາຍແຫ່ງຊາດດ້ານຢາວາງອອກ ກໍ່ຄືກົດໝາຍ. ຂ້າພະເຈົ້າ, ໃນນາມລັດຖະມົນຕີວ່າການກະຊວງສາທາລະນະສຸກ ຂໍຖືໂອກາດນີ້ ສະແດງຄວາມຊົມເຊີຍມາຍັງກົມອາຫານ ແລະ ຢາ ແລະ ບັນດາທ່ານທັງໝົດ ທີ່ໄດ້ເປັນ ເຈົ້າການ ປະກອບສ່ວນ ເຂົ້າໃນການສ້າງ.

ຄູ່ມືສະບັບນີ້ ສຸດທີ່ມີຄວາມສຳຄັນຕໍ່ວຽກງານຄຸ້ມຄອງດ້ານການຢາ ຢູ່ ສ ປປ ລາວ ໂດຍສະເພາະໃນຂົງເຂດວຽກການຄັດເລືອກຢາ, ການຂຶ້ນທະບຽນຢາ ແລະ ການສະໜອງຢາ, ເຊິ່ງຈະຊ່ວຍເຮັດໃຫ້ຜູ້ຮັບຜິດຊອບວຽກງານ ກ່ຽວຂ້ອງເຂົ້າໃຈ, ຮັບຮູ້ ແລະ ເຊື່ອມຊຶມ ໄດ້ມີສະຕິມີຄວາມລະມັດລະວັງສູງຕໍ່ທຸກປະກົດການຫຍໍ້ທໍ້ຊຶ່ງຈະກໍ່ໃຫ້ເກີດມີຄວາມບໍ່ໂປ່ງໃສ, ເພື່ອສ້າງຄວາມເຊື່ອໝັ້ນຂອງມວນຊົນຕໍ່ການບໍລິ ການ ແລະ ການຄຸ້ມຄອງຂອງລັດ ໃນວຽກງານສາທາລະນະສຸກ ໃຫ້ມີປະສິດທິຜົນສູງຂື້ນ ແລະ ສາມາດຮັບປະກັນການສະໜອງຢາທີ່ມີລາຄາສົມເຫດສົມຜົນ, ມີຄຸນນະພາບ, ປະສິດທິພາບ ແລະ ມີຄວາມປອດໄພໃນການຊົມໃຊ້ ເຮັດໃຫ້ປະຊາຊົນບັນດາເຜົ່າສາມາດໄດ້ຮັບການບໍລິການຢ່າງທົ່ວເຖິງເມື່ອເວລາເຈັບເປັນ.

ເນື້ອໃນສຳຄັນຂອງຄູ່ມືສະບັບນີ້ ປະກອບມີຄື: ທັດສະນະທົ່ວໄປ ກ່ຽວກັບການສໍ້ລາດບັງຫລວງ, ຍຸດທະສາດໃນການ ແກ້ໄຂການສໍ້ລາດບັງຫລວງ, ປະເພດຂອງການຂາດຈັນຍາບັນ, ຜົນກະທົບຕໍ່ສຸຂະພາບ, ການນຳໃຊ້ຫລັກຈັນຍາບັນ ເຂົ້າໃສ່ວຽກຄຸ້ມຄອງການຢາ, ຄຸນຄ່າສິນລະທຳ ແລະ ຫລັກການຈັນຍາບັນ, ສິ່ງທີ່ຄວນ ແລະ ບໍ່ຄວນປະຕິບັດພ້ອມທັງມີຕົວຢ່າງປະກອບໃສ່. ຂ້າພະເຈົ້າຫວັງວ່າ ຄູ່ມືສະບັບນີ້ຈະຖືກນຳໄປເຜີຍແຜ່ ແລະ ຄົ້ນຄວ້າເຂົ້າ ໃນພາກປະຕິບັດຕົວຈິງໃນລະບົບສາທາລະນສຸກ ໂດຍສະເພາະນຳໄປສິດສອນ ຢູ່ໃນມະຫາວິທະຍາໄລ ແລະ ໂຮງຮຽນແພດຂັ້ນຕ່າງໆ ເພື່ອປູກຈິດສຳນຶກ ຂອງນັກຮຽນນັກສຶກສາ ກ່ຽວກັບຫລັກຈັນຍາບັນ ໃຫ້ກາຍເປັນ ຮູບປະທຳຕົວຈິງຢູ່ໃນສັງຄົມ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ມາຍັງຄະນະຮັບຜິດຊອບ ແລະ ອົງການອະນາໄມໂລກທີ່ໄດ້ໃຫ້ການ ສະໜັບສະໜູນ ຊ່ວຍເຫລືອ ດ້ານວິຊາການ ແລະ ການເງິນ ຕະຫລອດເຖິງ ການຈັດພິມ ຄູ່ມືສະບັບນີ້ ເພື່ອແຈກຢາຍໃຫ້ແກ່ ພາກສ່ວນ ກ່ຽວຂ້ອງໄດ້ນຳໃຊ້ຢ່າງກວ້າງຂວາງ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າຄູ່ມືສະບັບນີ້ ຈະຖືກນຳໃຊ້ຢ່າງສອດຄ່ອງຕາມທິດທາງການຈັດຕັ້ງປະຕິບັດທີ່ໄດ້ຕົກລົງ ໃນກອງປະຊຸມ ຄັ້ງວັນທີ 10-11 ກັນຍາ 2010. ຖ້າມີບັນຫາໃດ ທີ່ຍັງບໍ່ຄົບຖ້ວນ ແລະ ບໍ່ເໝາະສົມໃນການນຳໃຊ້ນັ້ນ ສະເໜີໃຫ້ຄະນະຮັບຜິດຊອບກ່ຽວຂ້ອງຄົ້ນຄວ້າ ແລະ ປັບປຸງໃນຄັ້ງຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 25 FEB 2011

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ກະຊວງ ສາທາລະນະສຸກ

ລັດຖະມົນຕີ

ດຣ. ປອນເມກ ດາລາລອຍ

# ສະລະບານ


**I. ພາກທົ່ວໄປ**........................................................................................ 1

1. ທັດສະນະທົ່ວໄປກ່ຽວກັບການສໍ້ລາດບັງຫລວງ................................................ 1
2. ຫລັກການລວມໃນການແກ້ໄຂບັນຫາການສໍ້ລາດບັງຫລວງຢູ່ພາກລັດ: ................. 2
3. ກໍລະນີສະເພາະດ້ານການຢາ........................................................................ 2
4. ປະເພດຂອງການຂາດຈັນຍາບັນ.................................................................... 3
5. ຜົນກະທົບຕໍ່ ສຸຂະພາບ ແລະ ລະບົບສາທາລະນະສຸກ......................................... 4
6. ການນໍາໃຊ້ຫລັກການຈັນຍາບັນເຂົ້າໃນວຽກງານການຢາ.................................... 5

**II. ໂຄງສ້າງພື້ນຖານຂອງຈັນຍາບັນ**.......................................................... 6

**III. ອົງປະກອບຂອງ ກອບຈັນຍາບັນ**........................................................ 6

1 ຄຸນຄ່າສິນລະທໍາ ແລະ ຫລັກການຈັນຍາບັນ..................................................... 6
2. ກົດລະບຽບຂອງການດໍາເນີນການ................................................................. 11
3. ກົນໄກໃນການຕັດສິນ (whistle -blowing = Ombudsman)............................... 14
4. ການເຮັດໃຫ້ວຽກງານຈັນຍາບັນກາຍເປັນ ປະເພນີ ທີ່ຕ້ອງປະຕິບັດຢູ່ໃນສັງຄົມ......... 15

**IV. ການຂຶ້ນທະບຽນຢາ**.......................................................................... 16

**V. ການຄັດເລືອກຢາ**............................................................................. 18

**VI. ການສະໜອງຢາ**.............................................................................. 20

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຫລັກຈັນຍາບັນເພື່ອການຄຸ້ມຄອງທີ່ດີ ດ້ານການຢາ

# I. ພາກທົ່ວໄປ

## 1. ທັດສະນະທົ່ວໄປກ່ຽວກັບການສໍ້ລາດບັງຫລວງ

ບັນດາອົງການຈັດຕັ້ງ ເພື່ອການພັດທະນາດ້ານຕ່າງໆໄດ້ວິໄຈວ່າ "ການສໍ້ລາດບັງຫລວງ" ຫລື "Corruption" ແມ່ນອຸປະສັກອັນໃຫຍ່ຫລວງຕໍ່ການພັດທະນາເສດຖະກິດສັງຄົມ. ການສໍ້ລາດບັງຫລວງ ເກີດຂຶ້ນຢູ່ຫລາຍປະເທດ ຊຶ່ງໄດ້ເຮັດໃຫ້ມີການເສື່ອມເສັຍດ້ານສິນລະທຳ, ບໍ່ມີຄວາມຍຸດຕິທຳໃນສັງຄົມ. ມັນແມ່ນນຶ່ງໃນສາເຫດທີ່ເຮັດໃຫ້ປະຊາຊົນຈຳນວນຫລວງຫລາຍເກີດມີຄວາມທຸກຍາກ; ທຳລາຍຄວາມເຊື່ອໝັ້ນ; ຫລຸດຜ່ອນ ຄວາມສາມາດ, ກຽດສັກສີຂອງບຸກຄົນ ແລະ ຄວາມສັກສິດ ຂອງການຈັດຕັ້ງ ແລະ ສະຖາບັນຕ່າງໆ ໃນການຄຸ້ມຄອງການເຄື່ອນໄຫວບໍລິການຮັບໃຊ້ສັງຄົມທົ່ວໄປ. ການສໍ້ລາດບັງຫລວງທຳລາຍສ່ວນປະກອບຕົ້ນຕໍຂອງ ການລົງທຶນດ້ານສັງຄົມ, ຖ້າຫາກບໍ່ມີການລົງທຶນດ້ານນີ້ກໍຈະຈັກຄຸ້ມຄອງບໍລິຫານ ທີ່ເປັນປະຊາທິປະໄຕ ບໍ່ສາມາດເຄື່ອນໄຫວຢ່າງມີປະສິດທິຜົນ. ທັງໝົດນີ້ມັນແມ່ນບັນຫາສິນລະທຳ ສະນັ້ນທຸກໆພາກສ່ວນຂອງສັງຄົມຕ້ອງໄດ້ເອົາໃຈໃສ່ແກ້ໄຂ.

ອົງການສາກົນກ່ຽວກັບຄວາມໂປ່ງໃສໄດ້ໃຫ້ຄຳນິຍາມການສໍ້ລາດບັງຫລວງໄວ້ວ່າ
*"ແມ່ນການນຳໃຊ້ອຳນາດໄປໃນທາງທີ່ບໍ່ຖືກຕ້ອງເພື່ອໃຫ້ໄດ້ມາດ້ານຜົນປະໂຫຍດສ່ວນຕົວ"*

**ຕາມກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫລວງ ເລກທີ 03/ສພຊ ລົງວັນທີ 19 ພຶດສະພາ 2005, ມາດຕາ 2, ສປປລາວ ໄດ້ ນິຍາມວ່າ: ການສໍ້ລາດບັງຫລວງ ແມ່ນ "ພຶດຕິກຳ ຂອງພະນັກງານ ທີ່ໄດ້ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນເພື່ອຍັກຍອກ, ສໍ້ໂກງ, ຮັບ**

**ສິນບົນ ແລະ ພຶດຕິກຳອື່ນໆ ທີ່ກຳນົດໄວ້ ໃນມາດຕາ 10 ຂອງກົດໝາຍສະບັບນີ້ ເພື່ອຫາຜົນປະໂຫຍດໃຫ້ຕົນເອງ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກ ຊຶ່ງກໍ່ຄວາມເສັຍຫາຍ ໃຫ້ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດ ຂອງ ພົນລະເມືອງ"**

## 2. ຫລັກການລວມໃນການແກ້ໄຂບັນຫາການສໍ້ລາດບັງຫລວງຢູ່ພາກລັດ:

- ໄດ້ນຳໃຊ້ 2 ຍຸດທະສາດພື້ນຖານຄື:

**ຍຸດທະສາດທີ 1:**

- ແມ່ນການສ້າງ ແລະ ປັບປຸງບັນດາກົດໝາຍ, ຂໍ້ກຳນົດລະບຽບການຕ່າງໆ ເພື່ອຄຸ້ມຄອງບໍລິຫານການເຄື່ອນໄຫວດ້ານຢາ ໃຫ້ຄົບຖ້ວນ ແລະ ຮັດກຸມ. ປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເໝາະສົມ, ໂດຍອີງໃສ່ "ວິທີການຄຸ້ມຄອງຕາມຂໍ້ກຳນົດກົດລະບຽບ"ຕ່າງໆ ເພື່ອກຳຈັດ ພຶດຕິກຳການສໍ້ລາດບັງຫລວງ.

**ຍຸດທະສາດທີ 2:**

- ແມ່ນອີງໃສ່ "ວິທີການດ້ານຄຸນຄ່າ" ຊຶ່ງມີຄວາມພະຍາຍາມໃນການສົ່ງເສີມຄວາມໝັ້ນ ຄົງຂອງລະບົບການຄຸ້ມຄອງທີ່ຄົບຖ້ວນ ຂອງການຈັດຕັ້ງ ແລະ ສະຖາບັນ ໂດຍການສົ່ງເສີມຄຸນຄ່າສິນລະທຳ ແລະ ຫລັກຈັນຍາບັນໃຫ້ເປັນເຄື່ອງມືໃນການຊຸກຍູ້ ການຈັດຕັ້ງປະຕິບັດຈັນຍາ ບັນ ຂອງພາກລັດ.

ຜ່ານພຶດຕິກຳຕົວຈິງ 2 ຍຸດທະສາດນີ້ ບໍ່ສາມາດຕັດແຍກອອກຈາກກັນໄດ້. ດັ່ງນັ້ນ ຈຶ່ງມີຄວາມຈຳ ເປັນຕ້ອງປະຕິບັດແບບປະສົມປະສານຂອງ 2 ຍຸດທະສາດ ໄປ ພ້ອມໆກັນ ເພື່ອເຮັດ ໃຫ້ມີຜົນກະທົບທີ່ດີ ໃນການປະຕິບັດທີ່ມີຈັນຍາບັນ ຢູ່ພາຍໃນການຈັດຕັ້ງ ແລະ ສະຖາບັນໃດໜຶ່ງ.

## 3. ກໍລະນີສະເພາະດ້ານການຢາ

ການສໍ້ລາດບັງຫລວງ ມັກເກີດມີ ຂຶ້ນຢູ່ ຂົງເຂດການຢາ ເນື່ອງມາຈາກ ບັນດາປັດໄຈດັ່ງລຸ່ມນີ້:

- ບໍລິມາດຂອງຕະຫລາດ ແລະ ຜົນປະໂຫຍດທາງດ້ານທຸລະກິດ.
- ຂໍ້ມູນເພື່ອຊັ່ງຊາ ໃຫ້ແກ່ການປະເມີນຜົນ ທາງດ້ານຄຸນນະພາບ, ຄວາມປອດໄພ ແລະ ປະສິດທິພາບຂອງຢາ ທີ່ເປັນເອກະລາດ.
- ການເຂົ້າຮ່ວມຂອງພະນັກງານການນຳຂັ້ນສູງ ໃນການຄຸ້ມຄອງ.

- ຂັ້ນຕອນຕ່າງໆບໍ່ໄດ້ກຳນົດ ແລະ ຂຽນອອກຢ່າງຈະແຈ້ງ.
- ການກວດກາມີການຈຳກັດ ຫລື ຊ້ຳຊ້ອນ.
- ລະບົບກະຕຸກຊຸກຍູ້ແລະຈູງໃຈ ທີ່ ບໍ່ເຫມາະສົມ.
- ມີຄວາມສັບສົນໃນການຈຳແນກລະຫວ່າງ ການສໍ້ລາດບັງຫລວງ ແລະ ການປະຕິບັດງານທີ່ບໍ່ມີປະສິດທິຜົນ

## 4. ປະເພດຂອງການຂາດຈັນຍາບັນ

ການມີຜົນປະໂຫຍດສ່ວນຕົວມັກເປັນແຮງຊຸກດັນໃຫ້ເກີດມີການຂາດຈັນຍາບັນ. ໃນສະຖາບັນຂອງລັດ, ຜົນປະໂຫຍດສ່ວນຕົວຊຶ່ງມັກເກີດຂຶ້ນເລື້ອຍໆ ມີຢູ່ 3 ປະເພດ ທີ່ບໍ່ໄດ້ເອົາໃຈໃສ່ຕໍ່ການສໍ້ລາດບັງຫລວງ. ຂໍ້ຂັດແຍ່ງດ້ານຜົນປະໂຫຍດສ່ວນຕົວນັ້ນມັກພົບເຫັນໃນອົງການຂອງລັດ:

- ເມື່ອມີການເຊັນສັນຍາກັບບໍລິສັດໃດໜຶ່ງ.
- ເມື່ອຮັບບຸກຄະລາກອນເຂົ້າເຮັດວຽກມີການລຳອຽງ.
- ໄດ້ຮັບຜົນປະໂຫຍດຈາກບໍລິສັດທີ່ໄດ້ມີສັນຍານຳກັນ ພາຍຫລັງສຳເລັດວຽກງານແລ້ວ.

ສະຖາບັນຂອງ ລັດໄດ້ມີຄວາມເອົາໃຈໃສ່ໃນການສະກັດກັ້ນການປະຕິບັດທີ່ຂາດຈັນຍາບັນຕໍ່3 ປະເພດພຶດຕິກຳສໍ້ລາດບັງຫລວງ ຂ້າງເທິງນັ້ນ ໂດຍສ້າງນະໂຍບາຍ ແລະ ຂັ້ນຕອນຕ່າງໆເພື່ອພະຍາຍາມ ສະກັດກັ້ນ 3 ປະເພດ ຜົນປະໂຫຍດສ່ວນຕົວດັ່ງກ່າວ.

ໃນພາກປະຕິບັດຕົວຈິງ ຍັງມີການສໍ້ລາດບັງຫລວງ ຮູບແບບອື່ນໆ ຊຶ່ງບາງຄັ້ງຄາວສະຖາບັນຂອງລັດບໍ່ໄດ້ໃຫ້ຄວາມເອົາໃຈໃສ່ເທົ່າທີ່ຄວນເຊິ່ງໄດ້ກາຍເປັນຄວາມຊິນເຄີຍສ່ວນໜຶ່ງທີ່ບໍ່ເປັນທາງການໃນສະຖາບັນຂອງລັດ. ລາຍການດັ່ງຕໍ່ໄປນີ້ໄດ້ສະແດງໃຫ້ເຫັນເຖິງພຶດຕິກຳທີ່ບໍ່ມີຈັນຍາບັນປະເພດຕ່າງໆເຊິ່ງແມ່ນຈຸດສຳຄັນຂອງການສໍ້ລາດບັງຫລວງ ຢູ່ໃນການຄຸ້ມຄອງວຽກງານການຢາ:

**ການຮັບສິນບົນ, ການຮັບລາງວັນ ແລະ ຫລື ການຮັບຂອງຕ້ອນ ສຳລັບການປະຕິບັດ ບາງ ພຶດຕິກຳທີ່ ຂາດຈັນຍາບັນດັ່ງຕໍ່ໄປນີ້:**

- ອະນຸຍາດໃຫ້ເຮັດການທົດລອງດ້ານຢາ-ແບບຫລອກລວງ ທີ່ສະໜັບສະໜຸນທາງດ້ານການເງິນໂດຍບໍລິສັດ ການຢາ ເພື່ອການຄ້າເປັນຕົ້ນຕໍ (ການສົ່ງເສີມທີ່ຂາດຈັນຍາບັນ).
- ເລັ່ງລັດຂັ້ນຕອນຂອງການຂຶ້ນທະບຽນຢາ.
- ການອອກໃບຢັ້ງຢືນ ແລະ ຂັ້ນຕອນການອອກໃບອະນຸຍາດ ທີ່ບໍ່ເປັນໄປຕາມຫລັກການ.
- ການປົກປິດຜົນຂອງການກວດກາຄຸນນະພາບຢາ.

- ການສົມຮູ້ຮ່ວມຄິດໃນການປະມູນກ່ຽວກັບການສະໜອງຢາ ໂດຍການສະໜອງຂໍ້ມູນລັບສຳຄັນ ທີ່ພົວພັນກັບຂັ້ນຕອນຂອງການປະມູນໃຫ້ແກ່ຜູ້ປະມູນ.
- ການຄັດເລືອກຢາພິເສດໃດໜຶ່ງ ເຂົ້າໃນບັນຊີຢາຈຳເປັນພື້ນຖານ.
- ເຮັດສັນຍາໃນການສະໜອງຢາ.
- ບໍ່ໃຫ້ຂໍ້ມູນທີ່ຊັດເຈນຕໍ່ຜູ້ສະໜອງທີ່ບໍ່ຜ່ານການຄັດເລືອກ.

**ການລັກໂລບ**

- ການລັກໂລບຢາສຳລັບໄປນຳໃຊ້ສ່ວນຕົວ ຫລື ໄປຂາຍຄືນໃຫ້ພາກເອກະຊົນ.
- ການລັກຂາຍຢາທີ່ແຈກຢາຍລ້າເພື່ອເອົາເງິນເຂົ້າຖົງຕົນເອງ.

ບັນດາປະເພດພຶດຕິກຳສໍ້ລາດບັງຫລວງທີ່ກ່າວມານີ້ ບໍ່ໄດ້ມີສະເພາະແຕ່ ຢູ່ໃນຂົງເຂດວຽກ ງານການຄຸ້ມຄອງດ້ານຢາເທົ່ານັ້ນ. ທຸກໆພາກສ່ວນຂອງສັງຄົມ ແມ່ນມີຄວາມສ່ຽງໃນລະດັບໃດໜຶ່ງຕໍ່ການ ປະຕິບັດ ທີ່ຂາດຈັນຍາບັນນີ້, ດັ່ງນັ້ນ ການພັດທະນາ ຂອບແຜນງານທີ່ມີຈັນຍາບັນ ສຳລັບການ ປົກຄອງ ແລະ ການຄຸ້ມຄອງຂົງເຂດການຢາ ອາດຈະມີຄວາມສອດຄ່ອງ ແລະ ສາມາດນຳໄປປະຕິບັດໄດ້ຢູ່ໃນຂົງເຂດອື່ນໆ ແລະ ບັນດາປະສົບການຂອງຂົງເຂດອື່ນໃນການແກ້ໄຂບັນຫາດັ່ງກ່າວນີ້ ອາດຈະສະໜອງປັດໄຈທີ່ສຳຄັນຕໍ່ຄວາມພະຍາຍາມດັ່ງກ່າວນີ້ໄດ້ເປັນຢ່າງດີ.

## 5. ຜົນກະທົບຕໍ່ ສຸຂະພາບ ແລະ ລະບົບສາທາລະນະສຸກ

ການປະຕິບັດທີ່ຂາດຈັນຍາບັນຢູ່ໃນຂົງເຂດການຢາ ສາມາດມີຜົນກະທົບຢ່າງຈະແຈ້ງຕໍ່ລະບົບສາທາລະນະສຸກ ແລະ ສຸຂະພາບຂອງປະຊາຊົນ:

<u>**ຜົນກະທົບຕໍ່ ດ້ານເສດຖະກິດ**</u>

- ການໃຊ້ຈ່າຍດ້ານຢາຢູ່ບັນດາປະເທດທີ່ມີລາຍຮັບຕ່ຳ ມີ ປະມານ:

  10-40% ຂອງງົບປະມານດ້ານສາທາລະນະສຸກ.

  20-50% ຂອງການໃຊ້ຈ່າຍດ້ານການຮັກສາສຸຂະພາບທັງໝົດ.
- ຜົນສະທ້ອນທີ່ມາຈາກການສໍ້ລາດບັງຫລວງໄດ້ກະທົບໃສ່ ປະຊາຊົນຜູ້ທີ່ທຸກຍາກເປັນສ່ວນຫລາຍຊຶ່ງແມ່ນລະບົບສາທາລະນະສຸກຂອງລັດເປັນຜູ້ຮັບຜິດຊອບ, ເຮັດໃຫ້ເກີດມີ ຄວາມບໍ່ສະເຫມີພາບ ຢ່າງຫນັກຫນ່ວງ ຢູ່ໃນສັງຄົມ.

<u>**ຜົນກະທົບຕໍ່ ສຸຂະພາບ**</u>

- ສູນເສັຍຊັບພະຍາກອນຂອງລັດໂດຍບໍ່ຈຳເປັນ ແລະຫລຸດຜ່ອນຄວາມ ສາມາດຂອງລັດ.
- ຂາດຢາຈຳເປັນພື້ນຖານ ຊຶ່ງເຮັດໃຫ້ ການເຈັບເປັນ ແລະ ການຕາຍ ມີການເພີ້ມຂຶ້ນ.
- ກະຈາຍຢາທີ່ບໍ່ມີຄວາມປອດໄພຢູ່ທ້ອງຕະຫລາດ.

- ສົ່ງເສີມການໃຊ້ຢາຢ່າງບໍ່ສົມເຫດສົມຜົນ (ການປິ່ນປົວ ແລະ ການໃຊ້ຈ່າຍ).

**<u>ຜົນກະທົບຕໍ່ພາບພົດ ຂອງ ສະຖາບັນ ແລະຄວາມເຊື່ອໝັ້ນຂອງມວນຊົນ</u>**

- ການຂາດຄວາມໂປ່ງໃສ ພາໃຫ້ມວນຊົນຫລຸດຜ່ອນຄວາມເຊື່ອໝັ້ນ ຕໍ່ສະຖາບັນ, ວິຊາຊີບການຮັກສາສຸຂະພາບ, ວິຊາການ ແລະ ອຸດສາຫະກຳການຢາ.
- ຄວາມເຊື່ອ ໝັ້ນຂອງມວນຊົນສູນຫາຍໄປ.

## 6. ການນຳໃຊ້ຫລັກການຈັນຍາບັນເຂົ້າໃນວຽກງານການຢາ

ໄດ້ພົບເຫັນການປະຕິບັດທີ່ຂາດຈັນຍາບັນຢູ່ໃນການຄຸ້ມຄອງວຽກງານການຢາ ໃນທຸກຂອດ ຂອງ ຕ່ອງໂສ້ການຢາ. ຕ່ອງໂສ້ ການຢາປະກອບ ດ້ວຍບັນດາຂັ້ນຕອນ ແລະ ໜ້າທີ່ການຈຳນວນໜຶ່ງ. ຖ້າ ຫາກວ່າບໍ່ນຳໃຊ້ຂັ້ນຕອນທີ່ຈະແຈ້ງຖືກຕ້ອງ ແລະ ມີການປະຕິບັດທີ່ມີຈັນຍາບັນແຕ່ລະ ໜ້າ ທີ່ການຈະມີຄວາມສ່ຽງສູງ ແລະ ງ່າຍຕໍ່ການເກີດການສໍ້ລາດບັງຫລວງ. ທຸກໆໜ້າທີ່ການມີຄວາມຈຳເປັນຕ້ອງໄດ້ຮັບການປົກປ້ອງຈາກການປະຕິບັດທີ່ ຂາດຈັນຍາບັນ ເພື່ອຮັບປະກັນໃຫ້ ຄົນເຈັບ ບໍ່ພຽງແຕ່ໄດ້ຮັບຢາທີ່ຕ້ອງການ, ແຕ່ວ່າເຊັ່ນດຽວກັນນັ້ນກໍໄດ້ຮັບຢາທີ່ມີຄວາມປອດໄພ, ຄຸນນະ ພາບດີ, ລາຄາທີ່ຍຸຕິທຳ ແລະ ບໍ່ໄດ້ຖືກສັ່ງຊື້ເນື່ອງມາຈາກ ອິດທິພົນຂອງການເຮັດທຸລະກິດ ທີ່ບໍ່ຖືກຕ້ອງ. ບັນດາໜ້າທີ່ການຕົ້ນຕໍ ຂອງຕ່ອງ ໂສ້ດ້ານຢາມີດັ່ງຕໍ່ໄປນີ້:

- ການຄົ້ນຄວ້າ ແລະ ການພັດທະນາ
- ການທົດລອງດ້ານກະລີນິກຂອງຢາ
- ລິຂະສິດ
- ການຜະລິດ
- ການຂຶ້ນທະບຽນ
- ການໃສ່ລາຄາ
- ການຄັດເລືອກ
- ການສະໜອງ
- ການແຈກຢາຍ
- ການຂຽນໃບສັ່ງຢາ ແລະ ການຊົມໃຊ້

ອົງການອານາໄມໂລກ ແລະ ສະຖາບັນອື່ນໆໄດ້ຄົ້ນຄວ້າອອກຄູ່ມືແນະນຳຂັ້ນຕອນສຳລັບຊົງເຂດຕ່າງໆ ຂອງຕ່ອງໂສ້ການຢາ. ບັນດາຄູ່ມື ແລະ ຂໍ້ແນະນຳຕ່າງໆໄດ້ສະເໜີຂັ້ນຕອນການປະຕິບັດການ ເພື່ອປັບປຸງການຄຸ້ມຄອງວຽກງານການຢາໃຫ້ມີປະສິດທິຜົນ ແລະ ປະສິດທິພາບດີ. ຫລາຍໆ ນະໂຍບາຍ ແລະ ຂັ້ນຕອນທີ່ໄດ້ກຳນົດອອກນຳສະເໜີແມ່ນມີລັກສະນະບໍ່ຈະແຈ້ງ

ເພື່ອປ້ອງກັນ ຈາກການປະຕິບັດທີ່ຂາດຈັນຍາບັນ ແລະ ການສໍ້ລາດບັງຫລວງ, ແຕ່ວ່າໃນກໍລະນີ ທີ່ມີຈັນຍາບັນໄດ້ບົ່ງໄວ້ຢູ່ໃນທຸກຂັ້ນຕອນນັ້ນ ຈັນຍາບັນດັ່ງກ່າວກໍຍັງບໍ່ມີຄວາມຈະແຈ້ງດີເທື່ອ.

ເພື່ອປ້ອງກັນ ແລະ ຕ້ານຕໍ່ການສໍ້ລາດບັງຫລວງ ຢ່າງມີປະສິດທິຜົນ, ຕ້ອງປະຕິບັດບັນດາຄູ່ມືແນະນໍາພາຍໃຕ້ກອບຂອງຄຸນຄ່າສິນລະທໍາ ແລະ ຫລັກການຈັນຍາບັນທີ່ມີລັກສະນະຈະແຈ້ງດີ ເພື່ອ ສາມາດກະຕຸກຊຸກຍູ້ ແລະ ຊັກຈູງໃຫ້ມີຈັນຍາບັນ.

## II. ໂຄງສ້າງພື້ນຖານຂອງຈັນຍາບັນ

ເພື່ອເຮັດໃຫ້ກອບຂອງຄຸນຄ່າສິນລະທໍາ ແລະ ຫລັກການຈັນຍາບັນກະທົບຕໍ່ການນໍາພາຂອງພະນັກງານລັດໃນການປະຕິບັດໜ້າທີ່ຮັບຜິດຊອບ, ມີຄວາມຈໍາເປັນຕ້ອງໄດ້ສ້າງໂຄງສ້າງພື້ນຖານຈັນຍາບັນແລະໃຫ້ເຄື່ອນໄຫວໄດ້. ອົງປະກອບພື້ນຖານຂອງໂຄງສ້າງຈັນຍາບັນມີດັ່ງຕໍ່ໄປນີ້:

- ກອບຂອງຄຸນຄ່າສິນລະທໍາ ແລະ ຫລັກການຈັນຍາບັນ.
- ກົດລະບຽບຂອງການດໍາເນີນການ.
- ເຄື່ອງມືເພື່ອສົ່ງເສີມການນໍາໃຊ້ຄຸນຄ່າສິນລະທໍາ, ຫລັກການຈັນຍາບັນແລະກົດລະບຽບຂອງການດໍາເນີນການ ໃຫ້ປະຕິບັດຢ່າງກວ້າງຂວາງໃນສັງຄົມ.
- ການກວດກາ ການກະທໍາທີ່ມີຄວາມຜິດ.
- ກົນໄກໃນການຕັດສິນ (whistle -blowing = Ombudsman)
- ການປະສານງານ, ການຄຸ້ມຄອງ ແລະ ການປະເມີນຜົນໂຄງການຂອງຄຸນຄ່າສິນລະທໍາ.

ເນື້ອໃນເອກະສານນີ້ຈະມີການສົນທະນາເນັ້ນໜັກໃສ່ 2 ອົງປະກອບທໍາອິດຂອງໂຄງສ້າງທີ່ໄດ້ນໍາ ສະເໜີ ຂ້າງເທິງນັ້ນ. ອົງປະກອບອື່ນໆຈະໄດ້ນໍາສະເໜີ ຢູ່ໃນເອກະສານສະບັບຕໍ່ໄປ.

## III. ອົງປະກອບຂອງ ກອບຈັນຍາບັນ

### 1 ຄຸນຄ່າສິນລະທໍາ ແລະ ຫລັກການຈັນຍາບັນ

- ຄຸນຄ່າສິນລະທໍາ ສະແດງອອກ ໂດຍການປະຕິບັດໃນສິ່ງທີ່ເຊື່ອວ່າເປັນສິ່ງທີ່ດີ ແລະ ມີຄວາມສໍາຄັນ ຕົ້ນຕໍ ຕໍ່ຄວາມຮຸ່ງເຮືອງສີວິໄລຂອງສັງຄົມມະນຸດ. ຄຸນຄ່າສິນລະທໍາ ໄດ້ບົ່ງບອກການຕັດສິນຄວາມຖືກຕ້ອງ ໂດຍໄດ້ກໍານົດຄວາມຖືກຕ້ອງອີງໃສ່ຄວາມຜິດພາດ.

- ຫລັກການຈັນຍາບັນແມ່ນການສະແດງອອກ ໃນການປະຕິບັດຄຸນຄ່າສິນລະທຳ ແລະ ສະໜອງທິດຊີ້ນຳໃນການຕັດສິນໃຈ ແລະ ການປະຕິບັດການ.

ກອບຈັນຍາບັນທີ່ໄດ້ນຳສະເໜີໄດ້ອີງຕາມ ຄຸນຄ່າທາງດ້ານສິນລະທຳ 4 ຢ່າງ ທີ່ເຊື່ອວ່າມີຄວາມສຳຄັນ ໃນການປົກຄອງທີ່ດີ. ຄຸນຄ່າສິນລະທຳດັ່ງກ່າວນີ້ແມ່ນ: ຄວາມຍຸດຕິທຳ, ຄວາມຈິງ, ການບໍລິການຮັບໃຊ້ສັງຄົມທົ່ວໄປ ແລະ ການໄວ້ວາງໃຈ. ເປັນທີ່ຈະແຈ້ງແລ້ວວ່າ ຄຸນຄ່າສິນລະທຳມີຫລາຍລັກສະນະທີ່ມີການພົວພັນກັບຄວາມເປັນຢູ່ຂອງມະນຸດ, ແຕ່ວ່າເພື່ອເຮັດໃຫ້ກອບຈັນຍາບັນມີຄວາມງ່າຍດາຍ ແລະ ຈະແຈ້ງສາມາດຊີ້ແນະ ໃຫ້ພວກເຮົາຮຽນຮູ້ກ່ຽວກັບການປົກຄອງທີ່ມີຈັນຍາບັນຢູ່ໃນຂົງເຂດການຢາ, ຄຸນຄ່າ 4 ຢ່າງ ດັ່ງກ່າວ ນີ້ໄດ້ຖືກຄັດເລືອກເນື່ອງຈາກວ່າມັນໄດ້ຖືກກຳນົດໃຫ້ເປັນຄຸນຄ່າຫລັກ ເຊິ່ງໄດ້ພົວພັນໂດຍກົງກັບຄວາມບົກຜ່ອງຂອງສິນລະທຳທີ່ມີຢູ່ຊຶ່ງເອື້ອອຳນວຍຕໍ່ການສໍ້ລາດບັງຫລວງ.

ຢູ່ພາຍໃຕ້ຄຸນຄ່າສິນລະທຳແຕ່ລະອັນໄດ້ກຳນົດຫລັກການຈັນຍາບັນພື້ນຖານ ແລະ ຄຳສອນທີ່ອອກມາຈາກຄຸນຄ່າສິນລະທຳ. ຫລັກການຈັນຍາບັນບາງອັນແມ່ນມາຈາກຄຸນຄ່າສິນລະທຳສະ ເພາະໃນຂະນະທີ່ຫລັກການຈັນຍາບັນອື່ນໆ ອາດມີກົກຮາກຂອງມັນຢູ່ໃນຫລາຍກວ່າຄຸນຄ່າສິນລະທຳຕົວນຶ່ງ. ສິ່ງນີ້ມັນບໍ່ແມ່ນບັນຫາຕົ້ນຕໍ. ເປົ້າໝາຍການຮວບຮວມຫລັກການຈັນຍາບັນທີ່ຢູ່ພາຍໃຕ້ຄຸນຄ່າສິນລະທຳສະເພາະແມ່ນ ເພື່ອຊ່ວຍໃຫ້ມີຄວາມເຂົ້າໃຈຕໍ່ສິນລະທຳ ແລະ ທິດທາງຂອງຫລັກການຈັນຍາບັນ. ເມື່ອເຮົາມີຄວາມເຂົ້າໃຈການພົວພັນລະຫວ່າງຫລັກການ ຈັນຍາບັນ ແລະ ຄຸນຄ່າສິນລະທຳ, ຄວາມເປັນຫວ່ງໄຍສາມາດສ່ອງແສງໃຫ້ເຫັນ ການຈູງໃຈທີ່ຈຳເປັນ ສຳລັບການປະຕິບັດຫລັກການຈັນຍາບັນທີ່ຍືນຍົງຢູ່ໃນການປົກຄອງຂົງເຂດການຢາ ແລະ ຂົງເຂດອື່ນໆກໍເຊັ່ນດຽວກັນ.

ການປະກອບສ່ວນທີ່ຈິງໃຈ ແລະ ມີສະຕິຕໍ່ຄຸນຄ່າສິນລະທຳແມ່ນ ເປັນແຫລ່ງທີ່ດີເລີດ ໃນການຈູງໃຈ ຊຶ່ງເຮັດໃຫ້ມີຄວາມພະຍາຍາມທີ່ຍືນຍົງ ແລະ ຄວາມອົດທົນໃນການບໍລິການ ຮັບໃຊ້ສັງຄົມທົ່ວໄປ. ບໍ່ຄວນຖືເບົາພະລັງຂອງການຈູງໃຈ. ມັນສາມາດສ້າງໃຫ້ພະນັກງານລັດມີພະລັງແຮງດ້ວຍການສະໜັບສະໜູນຫລັກການຈັນຍາບັນຊຶ່ງຈະຊ່ວຍໃຫ້ພວກເຂົາເຈົ້າຕ້ານທານການຊັກຊວນໃຫ້ມີແນວຄິດເຫັນແກ່ວັດຖຸ ທີ່ມາຈາກການສໍ້ລາດບັງຫລວງ.

### *ຄວາມຍຸຕິທຳ/ຄວາມຖືກຕ້ອງ*

ຄວາມຍຸຕິທຳ ຕ້ອງສະແດງອອກ ດ້ວຍການຕັດສິນທີ່ທ່ຽງທຳໃນເວລາປະຕິບັດຕົວຈິງໃນການໄຈ້ ແຍກ ຄວາມຈິງຂອງຄວາມຈິງ ແລະ ຫລັກການໃນການຕັດສິນໃຈທີ່ນຳໄປສູ່ການກະທຳ.

ຄວາມ ຍຸຕິທຳ ແມ່ນອີງໃສ່ 2 ເສົາຫລັກ ຂອງການໃຫ້ລາງວັນ ແລະ ການລົງໂທດ. ສະຖາບັນຕ່າງໆ ຢູ່ໃນສັງຄົມ ຄວນຄຸ້ມຄອງດ້ວຍຫລັກການຂອງຄວາມຍຸຕິທຳ. ການນຳໃຊ້ຫລັກການຂອງການ ປຶກສາ ຫາລື ໃນ ການເຕົ້າໂຮມຄຳຄິດຄຳເຫັນ ສ້າງໃຫ້ມີຂັ້ນຕອນ ແມ່ນການສະແດງອອກ ໃນການ ປະຕິບັດຄວາມຍຸຕິທຳ ໃນທຸລະກິດວຽກງານຂອງມະນຸດ. ຂັ້ນຕອນໃນການປຶກສາຫາລື ສ້າງໃຫ້ມີ ຄວາມຫລາກ ຫລາຍຂອງທັດສະນະຕ່າງໆ ແລະ ຂໍ້ມູນຂ່າວສານ ທີ່ຈະພິຈາລະນາ ເພື່ອເຮັດໃຫ້ມີ ການຕັດສິນ ທີ່ຖືກຕ້ອງ. ຜົນສຳເລັດຂອງຄວາມເປັນເອກະພາບຢູ່ໃນຄວາມຫລາກຫລາຍ ຢູ່ໃນສັງ ຄົມ ແມ່ນ ຂື້ນຢູ່ກັບມາດຕະການຕາມລະດັບການເຂົ້າຮ່ວມຂອງ ປະຊາຊົນໃນການເຕົ້າໂຮມ ການ ຕັດສິນໃຈ ໂດຍຜ່ານຂັ້ນຕອນການປຶກສາຫາລື. ດັ່ງນັ້ນ, ຂັ້ນຕອນການປຶກສາຫາລືໄດ້ຖືກຮັບຮູ້ວ່າ ເປັນການ ພິຈາລະນາທີ່ສຳຄັນຂອງການປົກຄອງທີ່ຍຸຕິທຳ.

ຄວາມຖືກຕ້ອງ (Fairness) ແມ່ນການສະແດງອອກໃນການປະຕິບັດຄວາມຍຸຕິທຳ ຢູ່ໃນລະ ດັບຂອງບຸກຄົນ. ສະຖາບັນຕ່າງໆ ຢູ່ໃນສັງຄົມບໍລິຫານຄວາມຍຸຕິທຳດ້ວຍວິທີການລວມສູນ, ໃນຂະ ນະດຽວກັນນັ້ນ ການປະພຶດຂອງສ່ວນບຸກຄົນ ກໍພະຍາຍາມໃຫ້ມີຄວາມຍຸຕິທຳ ໃນການຕັດສິນບັນ ຫາ. ຄວາມເປັນທຳ ສະແດງໃຫ້ເຫັນວ່າມີຄວາມຮັບຜິດຊອບ ດ້ານສິນລະທຳຢ່າງເຕັມທີ່ ທີ່ເຫັນ ໄດ້ດ້ວຍຕາຕົນເອງ ບໍ່ແມ່ນຜ່ານສາຍຕາຂອງຄົນອື່ນ ແລະ ຮັບຮູ້ດ້ວຍຕົນເອງ ບໍ່ແມ່ນຜ່ານການຮັບ ຮູ້ຈາກຄົນອື່ນ. ແນວຄວາມຄິດຂອງຄວາມຍຸຕິທຳນີ້ ກໍ່ໃຫ້ເກີດ ມີ ສິນລະທຳ ທີ່ສຳຄັນທີ່ສຸດ ເພື່ອແກ້ໄຂບັນຫາ ຄວາມບໍ່ຍຸຕິທຳ ແລະ ເພື່ອ ຊອກຫາຄວາມຈິງໃນທຸກໆສິ່ງ.

**ຫລັກການຈັນຍາບັນຂອງຄວາມຍຸຕິທຳ**

- ຄຸ້ມຄອງດ້ວຍກົດຫມາຍ
- ມີຄວາມໂປ່ງໃສ ໃນການບໍລິຫານຢ່າງເຫມາະສົມຂອງ ອຳນາດການປົກຄອງ ແລະການ ນຳໃຊ້ຊັບພະຍາກອນຂອງລັດ
- ມີຄວາມເປັນທຳໃນການໃຫ້ລາງວັນ ແລະ ລົງໂທດ
- ມີສິດສະເຫມີພາບ ແລະ ໂອກາດເທົ່າທຽມກັນ
- ມີຂັ້ນຕອນການປຶກສາຫາລືເພື່ອຕັດສິນບັນຫາລວມຫມູ່ (ການມີສ່ວນຮ່ວມ)
- ມີລະບົບທີ່ດີໃນການບັນຈຸພະນັກງານ ເຂົ້າເຮັດວຽກ

***ຄວາມຈິງ***

ໂຄງສ້າງນີ້ ບໍ່ໄດ້ມີຄວາມພະຍາຍາມຈະນິຍາມຄວາມຈິງ, ແຕ່ ຄວນຈະເນັ້ນຫນັກ ຄວາມ ສຳຄັນ ທາງດ້ານສິນລະທຳ ທີ່ເປັນພື້ນຖານ ເພື່ອຊອກຫາ ແລະ ຮັບຮູ້ຄວາມຈິງ, ເພື່ອຮັບຮູ້ຄວາມ

ຈິງ ທີ່ໄດ້ພົບ ແລະ ຍອມຮັບ ໃນຄວາມເປັນຈິງຕໍ່ທຸກວຽກງານຂອງມະນຸດ. ການຍຶດໝັ້ນໃນ ຄວາມເປັນຈິງ ເພື່ອຄວາມຈິງ ແມ່ນພື້ນຖານຂອງຄວາມໜ້າເຊື່ອຖື, ຄວາມໝັ້ນຄົງ ແລະ ຄວາມມີກຽດສຳລັບບຸກຄົນ ແລະ ສະຖາບັນ. ໂຄງສ້າງນີ້ໄດ້ສະເໜີວ່າການຄົ້ນຫາຄວາມຈິງຈະຕ້ອງປະຕິບັດຕາມ 2 ຮູບແບບພື້ນຖານ. ຮູບແບບທີ 1 ແມ່ນຊອກຫາຄວາມຈິງ ຢູ່ໃນຂອບເຂດຂອງ ຄວາມເປັນຈິງທີ່ບໍ່ໄດ້ຄາດໝາຍມາກ່ອນ. ການຊອກ ຫາຄວາມຈິງ ຢູ່ໃນຂອບເຂດ ຂອງຄວາມເປັນຈິງໄດ້ເຮັດໃຫ້ເຮົາພົບເຫັນການຕັດສິນໃຈທີ່ມີຂໍ້ມູນຢ່າງຈະແຈ້ງ. ຮູບແບບທີ 2 ທີ່ຕ້ອງປະຕິບັດ ແມ່ນຊອກຫາຄວາມຈິງຢູ່ໃນຂອບເຂດຂອງຫລັກຈັນຍາບັນ ແລະ ຄຸນຄ່າສິນລະທຳທີ່ກ່ຽວພັນກັບການປົກຄອງທີ່ດີ. ແຕ່ບໍ່ເປັນດັ່ງທີ່ຄາດໄວ້, ໃນຂັ້ນຕອນການຕັດສິນໃຈ ພວກເຮົາມັກຖືເບົາ ຮູບແບບທີ່ 2 ນີ້, ຊຶ່ງສາມາດນຳໄປສູ່ພຶດຕິກຳທີ່ຂາດຈັນຍາບັນ ແລະ ສິນລະທຳ. ເມື່ອມີການຍົກບັນຫາດ້ານສິນລະທຳ ຢູ່ໃນຂັ້ນຕອນ ການປຶກສາຫາລື ແລະ ການຊອກຫາ ຄວາມຈິງຕ້ອງປະຕິບັດຕາມຫລັກຈັນຍາບັນໃຫ້ຖືກຕ້ອງ. ພະລັງແຮງແບບໃໝ່ ໄດ້ເກີດຂື້ນຢູ່ໃນການເຄື່ອນໄຫວ ຊຶ່ງສາມາດກໍ່ໃຫ້ເກີດມີ ຄຸນນະພາບ ແລະ ສະຕິປັນຍາໃນການຕັດສິນ ແລະ ຈັດຕັ້ງປະ ຕິບັດ. ຄວາມໂປ່ງໃສ ແລະຊື່ສັດກ່ຽວກັບຄວາມເປັນຈິງ ແລະ ຫລັກການຕ່າງໆ ທີ່ໄດ້ນຳໃຊ້ໃນການພິຈາລະນາການຕັດສິນໃຈທີ່ພົວພັນກັບການຄຸ້ມຄອງຊັບພະຍາກອນຂອງລັດຈະກໍ່ໃຫ້ເກີດມີຄວາມເຊື່ອ
ໝັ້ນຂອງມວນຊົນ ຢ່າງໃຫຍ່ຫລວງ.

**ຫລັກການຂອງຄວາມເປັນຈິງ**

- ຄວາມເຊື່ອໝັ້ນໃນການລາຍງານຄວາມເປັນຈິງ
- ຄວາມຊື່ສັດໃນການຄຸ້ມຄອງຊັບພະຍາກອນ (ຄວາມໝັ້ນຄົງ)
- ການຕັດສິນໃຈອີງໃສ່ຂໍ້ມູນທີ່ຊັດເຈນ (ຊອກຫາຄວາມຈິງທີ່ແນ່ນອນ)
- ຄວາມຈະແຈ້ງໃນການຕັດສິນໃຈ ແລະ ການຄຸ້ມຄອງຊັບພະຍາກອນ ເພື່ອໃຫ້ມວນຊົນສາມາດມີຄຳເຫັນໄດ້
- ໃຫ້ການຄຸ້ມຄອງຕໍ່ຜູ້ຕັດສິນ

### *ການໃຫ້ການບໍລິການຕໍ່ສັງຄົມທົ່ວໄປ*

ສັງຄົມມີຄວາມຄາດຫວັງໃຫ້ພະນັກງານລັດມີສິນລະທຳຢ່າງເຕັມສ່ວນໃນການປະຕິບັດໜ້າທີ່ເພື່ອຮັບໃຊ້ ຜົນປະໂຫຍດຂອງປະຊາຊົນ. ເມື່ອມີການໃຫ້ບໍລິການສັງຄົມທົ່ວໄປຢ່າງ ມີຄຸນຄ່າ ແລະ ຕໍ່ເນື່ອງ, ກຽດ ແລະ ຊື່ສຽງຂອງພະນັກງານລັດໃນການຮັບໃຊ້ສັງຄົມຈະເຫັນໄດ້ ຢ່າງຈະແຈ້ງ.

ຫລັກການນີ້ ໄດ້ນຳໃຊ້ຢ່າງເປັນເອກະພາບ ຢູ່ໃນສະຖາບັນຂອງລັດ ກໍ່ຄືກັນກັບ ບຸກຄົນ. ຄວາມມຸ່ງຫມັ້ນຂອງສະຖາບັນ ແລະ ບຸກຄະລາກອນ ຕໍ່ຄຸນຄ່າຫລັກ ຂອງການບໍລິການສັງຄົມທົ່ວໄປເປັນບໍ່ເກີດຂອງແຮງຈູງໃຈທີ່ສຳຄັນ, ຊຶ່ງເຮັດໃຫ້ມີຄວາມພະຍາຍາມ ແລະ ພາກພຽນທີ່ຍືນຍົງ, ເພື່ອສົ່ງເສີມໃຫ້ສັງຄົມມີການປ່ຽນແປງ ແລະ ພັດທະນາ. ເມື່ອພະນັກງານລັດຜູ້ນຶ່ງ ໄດ້ສວຍໃຊ້ຫນ້າທີ່ຕຳແຫນ່ງຂອງຕົນ ເພື່ອຮັບໃຊ້ຜົນປະໂຫຍດສ່ວນຕົວ, ພຶດຕິກຳນີ້ ແມ່ນມີທ່າອ່ຽງ ໃນການທຳລາຍຄວາມເຊື່ອຫມັ້ນຂອງປະຊາຊົນ, ຊຶ່ງເປັນສິ່ງປະກອບຕົ້ນຕໍ ຂອງ ທຶນຮອນ ຂອງສັງຄົມທີ່ຈຳເປັນໃນການປົກຄອງທີ່ມີປະສິດທິຜົນ. ການບໍລິການທີ່ມີປະສິດທິຜົນ ທີ່ບໍ່ຕິດພັນ ກັບຜົນປະໂຫຍດສ່ວນຕົວແມ່ນພື້ນຖານສູງສຸດຂອງຄວາມເຊື່ອຫມັ້ນຂອງປະຊາຊົນ.

ການຕົກລົງທີ່ເປັນເອກະພາບກ່ຽວກັບການບໍລິການສັງຄົມທົ່ວໄປ ແມ່ນ ຂະບວນການໃນການພັດທະນາ. ໂດຍທົ່ວໄປແລ້ວ ການບໍລິການສັງຄົມທົ່ວໄປໄດ້ກຳນົດໄວ້ອີງຕາມຄຸນຄ່າທີ່ໄດ້ຕົກລົງຮ່ວມກັນ. ການຕົກລົງຮ່ວມກັນທີ່ເປັນເອກະພາບ ກ່ຽວກັບການຮັບໃຊ້ສັງຄົມທົ່ວໄປຈະຕ້ອງມີການປ່ຽນແປງ ແລະ ວິວັດທະນາການ ຖ້າວ່າຄຸນຄ່າທີ່ໄດ້ຕົກລົງຮ່ວມກັນນັ້ນມີການປ່ຽນແປງຕະຫລອດເວລາ. ພາວະການເປັນຜູ້ນຳທີ່ມີສິນລະທຳມີບົດບາດສຳຄັນຢູ່ໃນສັງຄົມຈະຕ້ອງສ້າງຂໍ້ຕົກລົງ ທີ່ ເປັນເອກະພາບກ່ຽວກັບຄຸນຄ່າຫລັກທີ່ປະຕິບັດຮ່ວມກັນ ຊຶ່ງໃຫ້ຄຳນິຍາມຂອງສິນຄ້າທົ່ວໄປ. ພະນັກງານລັດຜູ້ນຶ່ງຕ້ອງມີຄວາມຮັບຜິດຊອບດ້ານສິນລະທຳ ເພື່ອຮັບປະກັນການຮັບໃຊ້ປະຊາຊົນ ແລະ ຜົນປະໂຫຍດ ສູງສຸດຕໍ່ສັງຄົມ. ຈິດສຳນຶກທີ່ມີຄຸນນະພາບ ຂອງພະນັກງານລັດແມ່ນເປັນສ່ວນນຶ່ງຂອງຄຸນຄ່າດັ່ງກ່າວມານີ້ເຊັ່ນດຽວກັນ.

**ຫລັກການໃນການໃຫ້ບໍລິການຕໍ່ ສັງຄົມທົ່ວໄປ**

- ການບໍລິການທີ່ມີປະສິດທິພາບ ແລະ ປະສິດທິຜົນຕໍ່ຜົນປະໂຫຍດ ຂອງມວນຊົນ
- ນຳໃຊ້ຕົວຊີ້ວັດ ຂອງການມີຊີວິດທີ່ດີຂອງຄົນ
- ການຮັບຮູ້ຄຸນຄ່າຄວາມເປັນຄົນ ແລະ ການເຄົາລົບກຽດ ສັກສີ ຊຶ່ງກັນແລະກັນ
- ຄວາມຄົບຖ້ວນ: ຄວາມມີນ້ຳໃຈໃຫ້ ການບໍລິການຕໍ່ທຸກໆຄົນ

### *ຫນ້າທີ່ຂອງຜູ້ທີ່ໄດ້ຮັບມອບຫມາຍ*

ການປົກຄອງທີ່ດີແມ່ນສະແດງອອກໃນການເຊື່ອຫມັ້ນຂອງມວນຊົນ. ສະຖາບັນຂອງລັດຈະບໍ່ສາມາດປະຕິບັດບົດບາດຢ່າງມີປະສິດທິພາບໂດຍປາສະຈາກລະດັບຄວາມເຊື່ອຫມັ້ນຂອງມວນຊົນ ຢ່າງເຫມາະສົມ, ຊຶ່ງສະແດງເຖິງຄວາມໄວ້ວາງໃຈຂອງມວນຊົນຕໍ່ພະນັກງານລັດ ແລະ ສະຖາບັນ. ມີການໃຫ້ຄຳຫມັ້ນສັນຍາດ້ານສິນລະທຳຢ່າງຈະແຈ້ງ ລະຫວ່າງສອງພາກສ່ວນ: ພະ

ນັກງານລັດ ແລະ ສັງຄົມ. ພະນັກງານລັດ, ໃນນາມເປັນຜູ້ຄຸ້ມຄອງຊັບພະຍາກອນຂອງຊາດ, ເປັນຜູ້ມີບົດບາດ ໃນການກຳນົດລະບຽບການ, ອອກຄຳສັ່ງ, ມີຄວາມຮັບຜິດຊອບຕໍ່ການບໍລິການທີ່ມີຜົນປະໂຫຍດສູງສຸດຕໍ່ສັງຄົມ, ເປັນຜູ້ທີ່ໄດ້ຮັບຄວາມໄວ້ວາງໃຈ ແລະ ຫນ້າເຊື່ອຖືຈາກປະຊາຊົນ. ຜົນໄດ້ຮັບ ທີ່ກັບມາແມ່ນສັງຄົມຮັບຮູ້ຄຸນງາມຄວາມດີ ຂອງການບໍລິການປະຊາຊົນ ຢ່າງຫນ້າເຊື່ອຖື, ມີການຕອບສະຫນອງໃຫ້ຄ່າຕອບແທນຢ່າງເຫມາະສົມ ແລະຍຸຕິທຳສຳລັບ ການບໍລິການມວນຊົນ.

ຫລັກການໃນການເປັນຜູ້ໄດ້ຮັບມອບຫມາຍ (**Trusteeship**)

- ຄຳຫມັ້ນສັນຍາດ້ານສິນລະທຳລະຫວ່າງ ສັງຄົມ ແລະ ພະນັກງານລັດ
- ການຮັບໃຊ້ຂອງພະນັກງານລັດ
- ຄວາມໂປ່ງໃສກ່ຽວກັບການຂັດແຍ້ງຕໍ່ຜົນປະໂຫຍດສ່ວນຕົວຂອງບຸກຄົນທີ່ຮຸນແຮງ
- ການຮັບຮູ້ຄຸນງາມຄວາມດີ ແລະ ການໃຫ້ຄ່າຕອບແທນ ທີ່ເຫມາະສົມ

ຫລັກການຈັນຍາບັນ ແລະ ຄຸນຄ່າສິນລະທຳ ທັງ 4 ປະການນີ້ ອາດຈະເປັນ ບັນຫາທີ່ປະຕິບັດຍາກ ແລະ ທ້າທາຍໃນການປະຕິບັດ ຢູ່ໃນສະພາບການຕົວຈິງຂອງສະຖາບັນທີ່ມີການຍອມຮັບການສໍ້ລາດບັງຫລວງ ໂດຍບໍ່ຮູ້ສຶກຕົວ. ການປະຕິບັດທີ່ເປັນລະບົບ ແລະ ຍຶດຫມັ້ນໃນຄວາມເປັນຈິງຂອງຫລັກການດັ່ງກ່າວ ອາດຈະຮຽກຮ້ອງໃຫ້ມີການນຳໃຊ້ ການເປັນຜູ້ນຳທີ່ມີສິນລະທຳຕໍ່ການຮັບໃຊ້ມວນຊົນ ໃນຂັ້ນຕອນຂອງການປະຕິຮູບສະຖາບັນຂອງສັງຄົມ. ຢູ່ໃນສະຖາບັນໃດນຶ່ງ, ມີພຽງແຕ່ການເປັນຜູ້ນຳທີ່ມີສິນລະທຳເທົ່ານັ້ນ, ຊຶ່ງໄດ້ຮັບຄວາມໄວ້ວາງໃຈຢ່າງເຕັມທີ່ ໃນການຈັດຕັ້ງປະຕິບັດໂຄງສ້າງດ້ານຄຸນຄ່າສິນລະທຳ ແລະ ຫລັກການຈັນຍາບັນ, ຈຶ່ງຈະສາມາດລົບລ້າງການສໍ້ລາດບັງຫລວງ ແລະ ປັບປຸງຄືນ ຄວາມເຊື່ອຫມັ້ນຂອງມວນຊົນ. ການເປັນຜູ້ນຳດັ່ງກ່າວແມ່ນຮຽກຮ້ອງໃຫ້ມີ ຄວາມກ້າຫານໃນດ້ານສິນລະທຳເພື່ອຈະມີຄວາມມານະອົດທົນ ແລະ ຮູ້ຄາດຄະເນຄວາມສ່ຽງຊຶ່ງຂັ້ນຕອນການປ່ຽນແປງດັ່ງກ່າວນັ້ນ ອາດມີຄວາມຈຳເປັນຕ້ອງສ້າງໃຫ້ມີການປົກຄອງທີ່ດີ.

## 2. ກົດລະບຽບຂອງການດຳເນີນການ

ບາງປະເທດໄດ້ສ້າງກົດລະບຽບຂອງການດຳເນີນການໂດຍອີງໃສ່ ຫລັກການຈັນຍາບັນ ແລະ ຄຸນຄ່າ ສິນລະທຳ ເພື່ອເປັນມາດຕະການໃນການປ້ອງກັນພຶດຕິກຳທີ່ບໍ່ໂປ່ງໃສ ຂອງການບໍລິການ ສັງຄົມທົ່ວໄປຢູ່ໃນການເຄື່ອນໄຫວຫນ້າທີ່ວຽກງານ. ບັນດາປະເທດທີ່ໄດ້ສ້າງກົດລະບຽບການດຳເນີນການ ແລະ ອົງປະກອບອື່ນໆຂອງກອບຈັນຍາບັນ ດັ່ງກ່າວນີ້ມີ 10 ປະເທດທີ່ໄດ້

ຖືກສຶກສາ ແລະ ໄດ້ ຢັ້ງຢືນຈາກອົງການສາກົນດ້ານຄວາມໂປ່ງໃສວ່າເປັນປະເທດ ທີ່ມີລະດັບການສໍ້ລາດບັງຫລວງຕໍ່າ.

ຄຸນຄ່າ, ຫລັກການ ແລະ ກົດລະບຽບ ຂອງການດໍາເນີນການແມ່ນ ມີການພົວພັນ ທີ່ຫມັ້ນຄົງ ແລະ ຕັກກະສາດ (Logic). ກົດລະບຽບຂອງການດໍາເນີນການ ໄດ້ພະຍາຍາມກໍານົດຢ່າງຈະແຈ້ງ ວິທີການປະຕິບັດຫລັກການຈັນຍາບັນ ໃຫ້ເປັນຮູບປະທໍາ. ກົດລະບຽບຂອງການ ດໍາເນີນ ການດັ່ງຕໍ່ ໄປນີ້ ໄດ້ກ່າວເຖິງ ປະເພດຂອງ ພຶດຕິກໍາ ຄວາມບໍ່ໂປ່ງໃສທີ່ພົບເຫັນເລື້ອຍໆ ດັ່ງໄດ້ກ່າວມາຂ້າງເທິງນັ້ນ. ກົດລະບຽບຂອງການດໍາເນີນການທີ່ເປັນພື້ນຖານມາດຕະຖານແມ່ນໂຄງ ສ້າງຂອງຄຸນຄ່າ ສິນລະທໍາທັງ 4 ແລະ ບັນດາຫລັກການທີ່ມາຈາກ ຄຸນຄ່າດັ່ງກ່າວ.

**<u>ສິ່ງທີ່ຄວນປະຕິບັດ:</u>**

- ການບໍລິການສັງຄົມໃດນຶ່ງ ແມ່ນຄວາມເຊື່ອຖືອັນນຶ່ງ ທີ່ຮຽກຮ້ອງໃຫ້ພະນັກງານລັດ ໃຫ້ມີຄວາມສັດທາດ້ານສິນລະທໍາຕໍ່ສັງຄົມ, ການປະຕິບັດຕາມກົດຫມາຍ ແລະ ຫລັກການຈັນຍາບັນ ໃຫ້ຢູ່ເຫນືອກວ່າ ຜົນປະໂຫຍດສ່ວນຕົວ.
- ພະນັກງານລັດຕ້ອງປະຕິບັດຫນ້າທີ່ ຂອງຕົນ ຢ່າງຄົບຖ້ວນຕາມຂໍ້ບັງຄັບດ້ານກົດຫມາຍ ຕໍ່ລັດ ແລະ ປະຊາຊົນ ດວ້ຍຄວາມຮັບຜິດຊອບທາງດ້ານວິຊາຊີບ ແລະ ຄວາມຫມັ້ນຄົງ ຂອງຊາດ.
- ພະນັກງານລັດຕ້ອງປະຕິບັດຫນ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນດ້ວຍຄວາມເປັນທໍາ, ຄວາມຫນ້າເຊື່ອຖື, ແລະດ້ວຍຄວາມມຸ້ງຫມັ້ນໃນການບໍລິການສັງຄົມທົ່ວໄປ (ຜົນປະໂຫຍດ ຂອງປະຊາຊົນ).
- ພະນັກງານລັດຕ້ອງປະຕິບັດຫນ້າທີ່ ຮັບຜິດຊອບຂອງຕົນ ດ້ວຍຄວາມຊື່ສັດ , ໂປ່ງໃສ ແລະ ດ້ວຍຄວາມຮັບຜິດຊອບສູງ.
- ພະນັກງານລັດຕ້ອງໃຫ້ຄວາມເຄົາລົບຕໍ່ສິດທິຂອງປະຊາຊົນແລະເພື່ອນຮ່ວມງານ ຂອງຕົນ.
- ພະນັກງານລັດຕ້ອງເປີດເຜີຍ ການປະຕິບັດທີ່ຂາດຈັນຍາທໍາ ແລະ ການສໍ້ລາດບັງຫລວງ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ.
- ພະນັກງານລັດຕ້ອງຫລີກລ້ຽງທຸກໆການກະທໍາ ທີ່ອາດຈະກໍ່ໃຫ້ເກີດມີການຝ່າຝືນຕໍ່ກົດຫມາຍຫລື ຝ່າຝືນຕໍ່ຫລັກການຈັນຍາບັນ ທີ່ໄດ້ສິ່ງເສີມໂດຍ ກົດລະບຽບຂອງການ ດໍາເນີນການ.

ພະນັກງານລັດທີ່ປະຕິບັດຫນ້າທີ່ຢ່າງຄົບຖ້ວນຕາມກົດລະບຽບຂອງການດໍາເນີນການນີ້ ຈະສາມາດຫລີກລ້ຽງໄດ້ບັນດາປະກົດການທີ່ຂັດຕໍ່ຜົນປະໂຫຍດສ່ວນຕົວ ແລະ ຂັດຕໍ່ພຶດຕິກໍາທີ່ບໍ່ມີຈັນຍາບັນຊຶ່ງຈະນໍາໄປສູ່ການສໍ້ລາດບັງຫລວງ. ກົດລະບຽບຂອງການດໍາ

ເນີນການນີ້ ໄດ້ພະຍາຍາມນໍາໃຊ້ ພາສາທີ່ງ່າຍດາຍເພື່ອພັນລະນາພຶດຕິກໍາທີ່ຄາດຫວັງຈາກພະນັກ ງານລັດ. ຢູ່ໃນກົດລະບຽບນີ້ໄດ້ ພັນລະນາ ສິ່ງທີ່ ພະນັກງານລັດຈະຕ້ອງປະຕິບັດ.

ບາງອົງການຈັດຕັ້ງຂອງລັດຖະບານໄດ້ອະທິບາຍຢ່າງແຈ່ມແຈ້ງ ຢູ່ໃນກົດລະບຽບຂອງການ ດໍາເນີນການກ່ຽວກັບສິ່ງທີ່ພະນັກງານລັດບໍ່ຄວນປະຕິບັດພຶດຕິກໍາຕ່າງໆທີ່ຂາດຈັນຍາບັນ ແລະ ມີ ການສໍ້ລາດບັງຫລວງທີ່ມັກເກີດຂຶ້ນ. ເຖິງແມ່ນວ່າລະບຽບການເຫລົ່ານີ້ບໍ່ໄດ້ບົ່ງບອກໄວ້ຢ່າງຄົບ ຖ້ວນຢູ່ ໃນກົດຂອງການດໍາເນີນການຂ້າງເທິງ, ແຕ່ມັນກໍໄດ້ ກ່າວຢ່າງຈະແຈ້ງແລ້ວ ເພື່ອຫລີກລ້ຽງ ທຸກໆການຄຸມເຄືອ ຫລື ການເຂົ້າໃຈຜິດ. ບັນດາຕົວຢ່າງດັ່ງຕໍ່ໄປນີ້ແມ່ນ ນຶ່ງໃນຈໍານວນທີ່ສໍາຄັນ ກວ່າຫມູ່:

<u>**ສິ່ງທີ່ບໍ່ຄວນປະຕິບັດ:**</u>

- ພະນັກງານລັດບໍ່ຕ້ອງຍຶດຖືເອົາຜົນປະໂຫຍດດ້ານການເງິນທີ່ຂັດກັບການສະແດງອອກ ດ້ານຄຸນສົມບັດ ໃນຫນ້າທີ່ຮັບຜິດຊອບທາງການ.
- ພະນັກງານລັດບໍ່ຕ້ອງໃຫ້ການບໍລິການທີ່ບໍ່ຖືກຕ້ອງ ຕາມໃຈມັກຂອງອົງການຈັດຕັ້ງ ເອກະ ຊົນໃດນຶ່ງ ຫລື ບຸກຄົນໃດນຶ່ງ.
- ພະນັກງານລັດບໍ່ຕ້ອງກ່ຽວຂ້ອງກັບການພົວພັນທຸລະກິດການເງິນໂດຍນໍາ ໃຊ້ຂໍ້ມູນຂ່າວສານທີ່ບໍ່ເປັນທາງການ ຫລື ອະນຸຍາດໃຫ້ນໍາໃຊ້ຂໍ້ມູນດັ່ງກ່າວຢ່າງບໍ່ຖືກຕ້ອງ ເພື່ອ ຜົນປະໂຫຍດສ່ວນຕົວໃດນຶ່ງໃນຕໍ່ຫນ້າ.
- ພະນັກງານລັດບໍ່ຕ້ອງເຮັດໃຫ້ສະຖາບັນຂອງຕົນເຊື່ອມເສັຍຊື່ສຽງ ໂດຍຜ່ານການເຄື່ອນ ໄຫວກິດຈະກໍາສ່ວນຕົວ.
- ພະນັກງານລັດ ຕ້ອງຫລີກລ້ຽງທຸກໆການກະທໍາທີ່ກໍ່ໃຫ້ເກີດມີການຝ່າຝືນຕໍ່ກົດຫມາຍ ຫລື ຝ່າຝືນຕໍ່ຫລັກການຈັນຍາບັນທີ່ແນະນໍາໂດຍ ກົດລະບຽບການດໍາເນີນການນີ້.

ການປະຕິບັດຫນ້າທີ່ ດ້ວຍ ຈິດສໍານຶກ ຂອງ ພະນັກງານລັດຕາມກົດລະບຽບຂອງການ ດໍາເນີນການ ທີ່ ເຫມາະສົມ ໃນການເຄື່ອນໄຫວຫນ້າທີ່ຮັບຜິດຊອບຂອງລັດ ຢູ່ໃນທຸກໆຂັ້ນຕອນ ແລະ ຂົງເຂດ ຕ່ອງໂສ້ການຢາ ຈະມີຜົນໃຫ້ແກ່ການປ້ອງກັນ ການປະຕິບັດທີ່ຂາດຈັນຍາບັນ ແລະ ການສໍ້ລາດບັງ ຫລວງ.

ມັນມີຄວາມຈໍາເປັນທີ່ໂຄງຮ່າງການບໍລິຫານ ແລະ ຂັ້ນຕອນໃນການຄຸ້ມຄອງ ຕ່ອງໂສ້ການ ຢາມີ ການກໍານົດຂອບເຂດ ພາຍໃຕ້ກອບຈັນຍາບັນ ແລະ ສິນລະທໍາ. ສິ່ງເຫລົ່ານີ້ ໄດ້ຮຽກຮ້ອງ ໃຫ້ ມີ ລະດັບໃນການວິໃຈ ແລະ ໃນການໃຫ້ເຫດຜົນດ້ານສິນລະທໍາສໍາລັບການນໍາໃຊ້ຫລັກການ ຈັນຍາບັນທີ່ເຫມາະສົມໃນການອອກແບບ ແລະ ການປະຕິບັດ ບັນດາຂັ້ນຕອນຕ່າງໆ. ຫນ້າ ວຽກນີ້ຄວນຈະເປັນກົດຈະກໍາໃຈກາງໃນການຮັບປະກັນການເຊື່ອມຍົງລະຫວ່າງກົດລະ

ບຽບຂອງການ ດຳເນີນການ ແລະ ຂັ້ນຕອນການບໍລິຫານ. ພາກທີ IV, V ແລະ VI ໄດ້ສະໜອງໂຄງຮ່າງໂດຍລວມໄລຍະເລີ້ມຕົ້ນຂອງການວິໃຈປະເພດນີ້ທີ່ໄດ້ນຳໃຊ້ໃນ3 ຂົງເຂດ ຂອງຕ່ອງໂສ້ດ້ານຢາ: ການຂຶ້ນທະບຽນ, ການຄັດເລືອກຢາ ແລະ ການສະໜອງຢາ.

## 3. ກົນໄກໃນການຕັດສິນ (whistle -blowing = Ombudsman)

ຄວາມຮັບຜິດຊອບຕໍ່ການຕັດສິນບັນຫາແມ່ນຄວາມກ້າຫານໃນການປະຕິບັດໜ້າທີ່ຂອງພະນັກງານລັດ ໂດຍຖືຜົນປະໂຫຍດສ່ວນລວມສູງກວ່າ ຜົນປະໂຫຍດສ່ວນຕົວ. ພະນັກງານດັ່ງກ່າວແມ່ນ ຜູ້ທີ່ຕົກຢູ່ໃນຄວາມສ່ຽງ ໃນການພົວພັນດ້ວຍຫລາຍຮູບແບບ. ຕໍ່ຄວາມສ່ຽງດັ່ງກ່າວ ມັນຈຳເປັນຕ້ອງສ້າງກົນໄກການຕັດສິນບັນຫາ ເພື່ອປົກປ້ອງຜູ້ຕັດສິນ ຈາກການຂົ່ມຂູ່ ແລະ ການຕອບໂຕ້ຈາກຜູ້ທີ່ສໍ້ລາດບັງຫລວງ. ອີກດ້ານນຶ່ງ ກົນໄກການຕັດສິນນີ້ ຕ້ອງປົກປ້ອງພະນັກງານລັດ ຈາກການຕັດສິນທີ່ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ ຊຶ່ງສາມາດທຳລາຍກຽດສັກສີ ແລະວິຊາຊີບ ຂອງເຂົາ ເຈົ້າ ຍ້ອນການກ່າວຫາທີ່ບໍ່ຖືກຕ້ອງ.

ຍ້ອນເຫດຜົນດັ່ງກ່າວ ຕ້ອງຍົກສູງຈຸດຢືນທີ່ຖືກຕ້ອງ ຂອງ ການຕັດສິນບັນຫາ. ການຕັດສິນບັນຫາ ທີ່ເປັນທີ່ຍອມຮັບ ຕ້ອງປະຕິບັດຕາມເງື່ອນໄຂຢ່າງຄົບຖ້ວນດັ່ງຕໍ່ໄປນີ້:

- ປະຕິບັດກັບບັນຫາທີ່ຮຸນແຮງ
- ຕ້ອງມີຂໍ້ມູນທີ່ ຊັດເຈນ ແລະ ແນ່ນອນ
- ປະຕິບັດໃນກໍລະນີ ຫລັງຈາກ ທີ່ ພາຍໃນໄດ້ຄົ້ນຄວ້າບັນຫາລະອຽດ, ຊັດເຈນ ແລະ
- ຄາດວ່າຈະໄດ້ຮັບຜົນທີ່ໜ້າພໍໃຈ

ຢູ່ບາງປະເທດ ໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດກາ ກວດການ ຂອງລັດ ທີ່ເປັນອົງກອນ ເອກະລາດໃນການຕັດສິນບັນຫາ, ທີ່ມີ ສຳນັກງານ ຫ້ອງການສະເພາະ.

### ອົງປະກອບອື່ນໆຂອງໂຄງປະກອບສ້າງດ້ານຈັນຍາບັນ

ກົນໄກສຳລັບການຕັດສິນບັນຫາໄດ້ສະແດງໃຫ້ເຫັນອົງປະກອບທີ່ເປັນຂໍກຸນແຈອັນນຶ່ງຂອງໂຄງ ປະກອບສ້າງດ້ານຈັນຍາບັນ, ຊຶ່ງຮຽກຮ້ອງໃຫ້ມີການວິໃຈແລະ ການສົນທະນາ ຢ່າງເລິກເຊິ່ງໃນ ຕໍ່ໜ້າ ຊຶ່ງບໍ່ໄດ້ນອນຢູ່ໃນເປົ້າໝາຍຂອງເອກະສານນີ້. ເຊັ່ນດຽວກັນ, ເອກະສານອື່ນໆກໍຕ້ອງໄດ້ ຮັບການພັດທະນາ ກ່ຽວກັບອົງປະກອບອື່ນໆຂອງໂຄງປະກອບສ້າງດ້ານຈັນຍາບັນເຊັ່ນ:

- ຄູ່ມືສຳລັບການສົ່ງເສີມ ແລະ ການສ້າງຊຸມຊົນທີ່ມີຄຸນຄ່າສິນລະທຳ, ຫລັກການຈັນຍາບັນ ແລະ ມີກົດລະບຽບຂອງການດຳເນີນການ
- ມີການຄວບຄຸມ ການກະທຳ ທີ່ ບໍ່ຖືກຕ້ອງ

➢ ມີການປະສານງານ, ການຄຸ້ມຄອງ ແລະ ປະເມີນຜົນໂຄງການຂອງຄຸນຄ່າ ແລະ ຈັນຍາບັນ

ແຕ່ລະອົງປະກອບຕ້ອງເປັນຈຸດສຸມຂອງເວທີການສົນທະນາແລະ ການປະຊຸມສຳ ມະນາໃນ ອະນາຄົດ.

## 4. ການເຮັດໃຫ້ວຽກງານຈັນຍາບັນກາຍເປັນ ປະເພນີ ທີ່ຕ້ອງປະຕິບັດຢູ່ໃນສັງຄົມ

ບັນຫາຂອງການສໍ້ລາດບັງຫລວງໄດ້ກະຕຸ້ນໃຫ້ມີຈິດສຳນຶກທີ່ຂະຫຍາຍຕົວ ກໍຄືຄວາມຈຳເປັນໃນ ການຕຳນິວິຈານ ເພື່ອປັບປຸງຄືນດ້ານສິນລະທຳຢູ່ໃນສັງຄົມ. ຢູ່ໃນບົດລາຍງານຂອງອົງການສະຫະປະຊາຊາດ, ໄດ້ສະເຫນີຜົນໄດ້ຮັບຂອງ 3 ກອງປະຊຸມກ່ຽວ ກັບຈັນຍາບັນ ແລະ ການຮັກວິຊາຊີບ ໃນການບໍລິການສັງຄົມ, ມີການຖົກຖຽງກັນວ່າ ***"ພະນັກງານລັດມີ ຫນ້າທີ່ ພິເສດຢູ່ໃນສັງຄົມ, ຊຶ່ງປະຊາຊົນໄດ້ມອບຫມາຍໃຫ້. ດັ່ງນັ້ນ, ພະນັກງານຂອງລັດ ຕ້ອງມີຄວາມຮັບຜິດຊອບໃນ ການປະຕິບັດຫນ້າທີ່ເພື່ອນຳເອົາຜົນປະໂຫຍດ ມາໃຫ້ປະຊາຊົນ. ຍິ່ງໄປກວ່ານັ້ນ, ພະນັກງານລັດ ຕ້ອງ ຮັບຜິດຊອບ ໃນການກະທຳທີ່ມີ ຈັນຍາບັນ, ຊື່ນຳ, ນຳພາດ້ວຍຄວາມຍຸຕິທຳ ແລະ ໂປ່ງໃສ, ເຮັດໃຫ້ບົດບາດການນຳພາຂອງຕົນສູງເດັ່ນຂຶ້ນ"***. ນຶ່ງໃນກອງປະຊຸມ ຂອງອົງການສະຫະປະຊາຊາດ ທີ່ໄດ້ຈັດຂຶ້ນຢູ່ປະເທດເບຣຊິນ ໃນປີ 2000 ຜູ້ເຂົ້າຮ່ວມໄດ້ເນັ້ນຫນັກຄວາມສຳ ຄັນຂອງ ***"ການເຮັດວຽກ ເພື່ອສະຫວັດດີການສັງຄົມ, ການບັງຄັບ ໃຊ້ລະບຽບກົດຫມາຍ, ການສົ່ງເສີມໃຫ້ມີຄວາມຮັບຜິດຊອບ, ມີຄວາມໂປ່ງໃສ, ແລະ ພຶດຕິກຳທີ່ ມີຈັນຍາບັນ ຊຶ່ງເປັນ ແບບຢ່າງທີ່ດີໃຫ້ແກ່ຜູ້ອື່ນ'***. ກອງປະຊຸມຍັງໄດ້ສະເຫນີອີກວ່າ ***"ຄວນໃຫ້ມີການອົບຮົມ ດ້ານ ຈັນຍາບັນໃຫ້ແກ່ພະນັກງານລັດ"***.

ການເຮັດໃຫ້ໂຄງສ້າງຂອງຄຸນຄ່າສິນລະທຳ ແລະ ຫລັກການຈັນຍາບັນ, ແລະ ກົດລະບຽບຂອງການດຳເນີນການ ກາຍເປັນປະເພນີປະຕິບັດ ໃນທົ່ວສັງຄົມ ເພື່ອໃຫ້ມີການຄຸ້ມຄອງທີ່ດີໃນຂົງເຂດການຢາ, ຈະຕ້ອງຮຽກຮ້ອງໃຫ້ມີຂັ້ນຕອນການແກ້ໄຂ ແລະ ການອົບຮົມ ຢ່າງເປັນລະບົບ. ຕ້ອງມີ ຄວາມພະຍາຍາມໃນການລິເລີ້ມສ້າງຂັ້ນຕອນຂອງການຕົກລົງທີ່ເປັນເອກະພາບກ່ຽວກັບຄຸນຄ່າສິນລະທຳ ແລະ ຫລັກການຈັນຍາບັນທີ່ຈະເປັນກອບໂຄງສ້າງທົ່ວໄປ. ກອບໂຄງສ້າງທີ່ໄດ້ນຳ ສະເຫນີຢູ່ໃນເອກະສານນີ້ ອາດນຳໃຊ້ ເປັນບ່ອນອີງ ໃນການປຶກສາຫາລື, ການສ້າງ ແລະ ການປັບ ປຸງ ໃນຂັ້ນຕໍ່ໄປ.

ພ້ອມກັນນັ້ນ, ການຝຶກອົບຮົມຄວນສຸມໃສ່ ການພັດທະນາຄວາມສາມາດດ້ານສິນລະທຳຊຶ່ງຮຽກ ຮ້ອງໃຫ້ປະຕິບັດໂຄງສ້າງ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງວຽກງານ. ຈຸດປະສົງທີ່ສຳຄັນຂອງ ໂຄງການຝຶກອົບຮົມຄວນປະກອບດ້ວຍ ການພັດທະນາ ສ້າງຄວາມສາມາດ ດ້ານສິນລະ

ທຳ ເຊັ່ນ ການປຶກສາຫາລື, ການແກ້ໄຂບັນຫາຂັດແຍ້ງ, ການໃຫ້ເຫດຜົນ ທີ່ມີ ສິນລະທຳ, ການສ້າງ ຂໍ້ຕົກລົງທີ່ເປັນເອກະພາບ, ແລະ ອື່ນໆ. ຜົນໄດ້ຮັບຈາກໂຄງການອົບຮົມດັ່ງກ່າວຈະເຮັດໃຫ້ພະນັກງານລັດມີບົດບາດເພີ້ມຂື້ນ ເພື່ອຮັບປະກັນຄວາມຮັບຜິດຊອບໃນການເປັນຜູ້ນຳພາດ້ານສິນລະທຳໃນການສົ່ງເສີມສິນລະທຳ ແລະ ການປັບປຸງຄວາມມຸ້ງໝັ້ນທີ່ຈຳເປັນໃນການຫັນປ່ຽນຂອງສັງຄົມ.

# IV. ການຂຶ້ນທະບຽນຢາ

ການຂຶ້ນທະບຽນຢາ ແມ່ນໜ້າທີ່ສຳຄັນອັນໜຶ່ງຂອງລັດ ເພື່ອຮັບປະກັນວ່າຢາທີ່ໄດ້ຂຶ້ນທະບຽນແລ້ວນັ້ນ ມີຄຸນນະພາບ, ປະສິດທິພາບ ແລະ ມາດຖານຄວາມປອດໄພ ຢ່າງເຕັມສ່ວນ.

ມີຄວາມຈຳເປັນຕ້ອງໄດ້ກຳນົດເງື່ອນໄຂ ແລະ ຂັ້ນຕອນ ຂອງການຂຶ້ນທະບຽນຢາຊຶ່ງ ເຮັດໃຫ້ ມວນຊົນສາມາດຮັບຮູ້ໄດ້.

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ການຍື່ນຄຳຮ້ອງໂດຍໃຊ້ ແບບຟອມ ແລະ ຂັ້ນຕອນທີ່ໄດ້ມາດຕະຖານ | - ມີສິດທິ ແລະ ໂອກາດ ເທົ່າທຽມກັນ<br>- ມີຄວາມເປັນທຳ (equity) |
| ການປະເມີນຜົນ ດ້ານຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ຂອງ ຜະລິດຕະພັນ | - ມີຄວາມສັດຊື່ໃນການລາຍງານຄວາມຈິງ<br>- ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ |
| ການປະເມີນຜົນຜູ້ຍື່ນຄຳຮ້ອງ (ຜູ້ຜະລິດ/ຜູ້ນຳເຂົ້າ/ຜູ້ຂາຍຍົກ) ທີ່ພົວພັນກັບການປະຕິບັດຕາມມາດຖານ ເຊັ່ນ GMP | - ມີຄວາມສັດຊື່ໃນການລາຍງານຄວາມຈິງ<br>- ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ<br>- ມີຄວາມເປັນທຳ |
| ການອອກໃບອະນຸຍາດ ຫລື ປະຕິເສດຄຳຮ້ອງ | - ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ<br>- ມີຄວາມເປັນທຳ |
| ການຮັບຮອງເອົາຊື່ຜະລິດຕະພັນໃຫ້ຢູ່ໃນບັນຊີອະນຸຍາດ | - ມີປະສິດທິຜົນ ແລະປະສິດທິພາບໃນການບໍລິການຕໍ່ ຜົນປະໂຫຍດຂອງມວນຊົນ |
| ການອອກອະນຸຍາດໃນການ:<br>- ຈຳໜ່າຍ ຫລື ແຈກຢາຍ<br>- ການຮຽກຮ້ອງ (Entitlement) ເຊັ່ນ ການຊົດເຊີຍທີ່ວ່ອງໄວ | - ມີຄວາມເປັນທຳ<br>- ມີການຍອມຮັບໃນຄຸນງາມຄວາມດີ (Recognition of merit) |

**ມີຄວາມຈຳເປັນຕ້ອງໄດ້ ກຳນົດ ນະໂຍບາຍ ແລະ ຂັ້ນຕອນ ໃນການບໍລິຫານ/ຄຸ້ມຄອງ ຢ່າງເປັນລາຍລັກອັກສອນຢ່າງຈະແຈ້ງ**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ພາລະບົດບາດຂອງແຕ່ລະໜ່ວຍງານ ແລະ ຕຳແໜ່ງງານ | - ມີຄວາມຮັບຜິດຊອບ<br>- ມີຄວາມຈະແຈ້ງ |
| ກຳນົດ ການພົວພັນລະຫວ່າງ ບັນດາໜ່ວຍງານ ແລະ ຕຳແໜ່ງງານ | - ມີຄວາມຈະແຈ້ງ |
| ສາຍໄຍຂອງການລາຍງານ/ການຮັບຮອງ/ການອະນຸຍາດ (clearance) | - ມີຄວາມຮັບຜິດຊອບ<br>- ມີຄວາມຈະແຈ້ງ |

**ມີຄວາມຈຳເປັນຕ້ອງສ້າງສະຖານທີ່ສະເພາະ ສຳລັບໃຫ້ຂໍ້ມູນແກ່ ມວນຊົນໃນການຂຶ້ນທະບຽນຢາ**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ຂໍ້ແນະນຳ- ເອກະສານອ້າງອີງ/ຂໍ້ມູນ - ມີໄວ້ສະໜອງໃຫ້ແກ່ມວນຊົນ | - ມີຄວາມຈະແຈ້ງ<br>- ມີປະສິດທິຜົນ ແລະປະສິດທິພາບໃນການບໍລິການຕໍ່ ຜົນປະໂຫຍດຂອງມວນ ຊົນ |
| ມີການຕິດຕໍ່ສື່ສານແບບ ຖາມ-ຕອບ ທາງໂທລະສັບ, ແຟກ, website, email, ປະກອບຄຳເຫັນ ແລະ ຟັງ ແລະ ອື່ນໆ | - ມີຄວາມຈະແຈ້ງ |

***ຕົວຢ່າງຂອງການປະຕິບັດທີ່ບໍ່ໂປ່ງໃສຢ່າງຮ້າຍແຮງ ຢູ່ໃນການຂຶ້ນທະບຽນຢາ***

- ຜູ້ສະໜອງຢາອາດຊື້ຈ້າງພະນັກງານຂອງລັດເພື່ອຂຶ້ນທະບຽນຜະລິດຕະພັນຂອງເຂົາເຈົ້າ ໂດຍບໍ່ຈຳເປັນມີຂໍ້ມູນແຕ່ຢ່າງໃດ
- ຜູ້ສະໜອງຢາອາດຊື້ຈ້າງພະນັກງານຂອງລັດເພື່ອຂຶ້ນທະບຽນຜະລິດຕະພັນຂອງເຂົາເຈົ້າ ແບບລັດຄິວ
- ພະນັກງານລັດ ອາດມີເຈດຕະນາ ແກ່ຍາວເວລາຂອງຂັ້ນຕອນການຂຶ້ນທະບຽນຢາເພື່ອ ຮຽກຮ້ອງເອົາຄ່າຈ້າງຈາກຜູ້ສະໜອງ.

# V. ການຄັດເລືອກຢາ

ການຄັດເລືອກຢາຈຳເປັນພື້ນຖານ ຈະຊ່ວຍໃນການຈັດລຽງບຸລິມະ ສິດ ຂອງລັດຖະບານ ໃນການ ສະໜອງ ຢາ ແລະ ຜົນປະໂຫຍດທາງການແພດ ຊຶ່ງແມ່ນສ່ວນໜຶ່ງຂອງການປະກັນ ສຸຂະພາບ.

ຢາຈຳເປັນພື້ນ ຖານ ແມ່ນຫຍັງ?

**ແນວຄວາມຄິດ:**ການຄັດເລືອກຢາຈຳເປັນພື້ນຖານໃນຈຳນວນຈຳກັດຢ່າງລະມັດລະວັງຈະ ນຳພາ ໄປສູ່ການບໍລິການຮັກສາສຸ ຂະພາບທີ່ດີ, ການຄຸ້ມຄອງຢາທີ່ດີ ແລະ ມີລາຄາຖືກ ກວ່າ.

**ນິຍາມ:** ຢາຈຳເປັນພື້ນຖານ ແມ່ນຢາທີ່ສອດຄ່ອງກັບຄວາມຕ້ອງການທີ່ເປັນບຸລິມະສິດ ໃນການຮັກສາສຸຂະພາບຂອງປະຊາຊົນ (ບົດລາຍງານຂອງ WHO Executive Board, ມັງກອນ 2002)

**ມີຄວາມຈຳເປັນຕ້ອງໄດ້ ກຳນົດເງື່ອນໄຂ ຢ່າງຈະແຈ້ງ ໃນການຄັດເລືອກຢາ ເພື່ອເຮັດໃຫ້ມວນຊົນ ສາມາດຮັບຮູ້ໄດ້.**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ການພິຈາລະນາ ສະພາບການ ເປັນພະຍາດ | - ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ |
| ມີຂໍ້ມູນຊັດເຈນ ກ່ຽວກັບ ປະສິດທິຜົນ ແລະ ຄວາມປອດໄພ | - ມີຄວາມສັດຊື່ໃນການລາຍງານຄວາມຈິງ<br>- ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ |
| ມີການສົມທຽບລາຄາ ຢ່າງ ມີປະສິດທິຜົນແລະ ກຸ້ມຄ່າ (ສຳລັບການປິ່ນປົວແບບດຽວກັນ) | - ມີປະສິດທິຜົນ ແລະປະສິດທິພາບໃນ ການບໍລິການຕໍ່ ຜົນປະໂຫຍດຂອງມວນ ຊົນ |
| - ມີການພິຈາລະນາພາຍໃນ<br>- ຜະລິດຢູ່ພາຍໃນປະເທດ<br>- ສະຖານທີ່ສຳລັບເກັບຮັກສາ<br>- ສະຖານທີ່ທຳການປິ່ນປົວ ແລະ ປະສົບປະການຂອງພະນັກງານ | - ບໍ່ຫຍຸ້ງກ່ຽວກັບ ຜົນ ປະໂຫຍດສ່ວນຕົວ(Conflict of Interest=COI)<br>- ມີຄວາມສັດຊື່<br>- ມີຄວາມໂປ່ງໃສ<br>- ເປັນໜ້າທີ່ຂອງຜູ້ໄດ້ຮັບມອບໝາຍ |
| ສ່ວນຫລາຍເປັນຢາດ່ຽວ, ຖ້າເປັນຢາປະສົມ ຕ້ອງມີການຮັບຮອງວ່າມີປະສິດທິຜົນດີກວ່າ | - ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ<br>- ມີຄວາມຈະແຈ້ງ<br>- ມີຕົວຊີ້ວັດກ່ຽວກັບຜົນດີຕໍ່ສຸຂະ ພາບ ຂອງຄົນ |

**ມີຄວາມຈຳເປັນຕ້ອງໄດ້ ກຳນົດ ຂັ້ນຕອນການຄັດເລືອກຢ່າງຈະແຈ້ງ ເພື່ອໃຫ້ມວນຊົນ ສາມາດຮັບຮູ້ໄດ້**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ມີຂັ້ນຕອນທີ່ຈະແຈ້ງ ແລະມີການປຶກສາຫາລື | - ການປຶກສາຫາລື ເປັນວິທີການ ໃນ ການ ການຕັດສິນຮ່ວມກັນ<br>- ມີຄວາມຈະແຈ້ງ |
| ຄະນະກຳມະການຄັດເລືອກມີຄວາມເປັນເອກະລາດ:<br>- ມີພາລະບົດບາດ<br>- ມີການພິຈາລະນາດ້ວຍຄວາມລະມັດລະວັງ ຕໍ່ສິດຜົນປະໂຫຍດ ສ່ວນຕົວ<br>- ມີຊ່ຽວຊານຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ (ແພດ, ພະຍາບານ, ໂອສົດວິທະຍາ, ການຢາ, ກຸ່ມຜູ້ບໍລິໂພກ, ພ/ງ ສາທາລະນະສຸກ)<br>- ມີການຫມູນວຽນ | - ມີ ຄວາມໂປ່ງໃສ<br>- ມີ ຂັ້ນຕອນປຶກສາຫາລື<br>-ບໍ່ຫຍຸ້ງກ່ຽວກັບຜົນປະໂຫຍດສ່ວນຕົວ<br>-ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ<br>- ມີຄວາມຄົບຖ້ວນ (Inclusiveness) |
| - ມີການພົວພັນຕໍ່ການສະເຫນີແນະຂອງ ການປິ່ນປົວທີ່ມີຂໍ້ມູນທີ່ຊັດເຈນ | - ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ |
| - ມີການເຜີຍແຜ່ຂໍ້ມູນຕໍ່ມວນຊົນຢ່າງວ່ອງໄວ (ທາງເອເລັກໂຕຣນິກ) | - ມີປະສິດທິຜົນ ແລະປະສິດທິພາບ ໃນ ການບໍລິການຕໍ່ ຜົນປະໂຫຍດ ຂອງມວນ ຊົນ<br>- ມີຄວາມຈະແຈ້ງ |
| ມີການປັບປຸງຢ່າງເປັນປົກກະຕິ (ທຸກໆ 2 ປີ) | - ການຕັດສິນທີ່ອີງໃສ່ຂໍ້ມູນທີ່ຊັດເຈນ<br>- ເປັນຫນ້າທີ່ຂອງຜູ້ໄດ້ຮັບມອບຫມາຍ |

**ບັນດາຂັ້ນຕອນໃນການທົບທວນຄືນບັນຊີຢາຈຳເປັນພື້ນຖານ - ຕົວຢ່າງການປັບປຸງບັນຊີຢາຈຳເປັນພື້ນຖານຂອງ ສປປລາວ**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ສັງລວມຄຳເຫັນຂອງບັນດາແຂວງ ແລະ ພາກສ່ວນຕ່າງໆທີ່ໄດ້ສົ່ງມາ | - ມີຄວາມຈະແຈ້ງ |
| ປະເມີນຄຳເຫັນຂອງ ບັນດາແຂວງ ແລະ ພາກສ່ວນຕ່າງໆ ແລະ ສົມທຽບ ປະສິດທິພາບ, ຄວາມປອດໄພ ແລະ ປະສິດທິຜົນກຸ້ມຄ່າ ໂດຍຫນ່ວຍງານຮັບຜິດຊອບກ່ຽວຂ້ອງ, | - ມີຄວາມຈະແຈ້ງ<br>- ມີຄວາມຫນ້າເຊື່ອຖືຕໍ່ການລາຍງານຄວາມຈິງ<br>- ມີການແຈ້ງ ການບໍ່ຫຍຸ້ງກ່ຽວກັບຜົນປະໂຫຍດ ສ່ວນຕົວ COI |

| | |
|---|---|
| ສ້າງຮ່າງຂໍ້ສະເໜີ, ກະກຽມປະຊຸມຜ່ານ ຊ່ຽວຊານ | |
| ຈັດກອງປະຊຸມທົບທວນຄືນ ຮ່າງຂໍ້ສະເໜີ ໂດຍ ຊ່ຽວຊານ ທີ່ ກ່ຽວຂ້ອງ | - ຂັ້ນຕອນການປຶກສາຫາລື ເພື່ອເຕົ້າໂຮມ ການຕັດສິນ<br>- ມີການແຈ້ງ ການບໍ່ຫຍຸ້ງກ່ຽວກັບຜົນປະໂຫຍດສ່ວນຕົວ COI<br>- ມີຄວາມຈະແຈ້ງ |
| ທົບທວນຄືນ ແລະ ປັບປຸງ ບັນຊີຢາໃຫ້ສົມບູນ | - ມີປະສິດທິຜົນ ແລະປະສິດທິພາບ ໃນການບໍລິການຕໍ່ ຜົນປະໂຫຍດ ຂອງມວນ ຊົນ |
| ຈັດພິມ, ເຜີຍແຜ່ | - ມີຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ |

***ຕົວຢ່າງຂອງການປະຕິບັດທີ່ບໍ່ໂປ່ງໃສທີ່ຮ້າຍແຮງ ຢູ່ໃນການຄັດເລືອກຢາ***

- ຜູ້ ຜະລິດ ຫລື ຜູ້ນໍາເຂົ້າຢາ ອາດໃຫ້ເງິນຊຸກຍູ້ພະນັກງານຂອງລັດເພື່ອເອົາຢາພິເສດໃດໜຶ່ງເຂົ້າ ຢູ່ໃນບັນຊີຢາຈໍາເປັນພື້ນຖານ
- ສະມາຊິກໃນຄະນະກໍາມະການຜູ້ທີ່ມີຜົນປະໂຫຍດສ່ວນຕົວ ອາດຈະແຊກແຊງເຂົ້າໃນການຕັດສິນສຸດທ້າຍ
- ຄະນະກໍາມະການຄັດເລືອກຢາມີຄວາມຫລົ້ມເຫລວໃນການນໍາໃຊ້ຂໍ້ມູນ ເພື່ອເປັນບ່ອນອີງໃນການຄັດເລືອກຢາ

ບັນດາຄວາມສ່ຽງທີ່ຮ້າຍແຮງ ຕໍ່ການສໍ້ໂກງນີ້ ສາມາດແກ້ໄຂໄດ້ ແລະ ປ້ອງກັນໄດ້ ໂດຍການອອກລະບຽບຫລັກການ ຂັ້ນຕອນໃນການຍື່ນຄໍາຮ້ອງ ແລະ ກໍານົດອອກ ຫລັກການ ຈັບຢາບັນ.

## VI. ການສະໜອງຢາ

ການສະໜອງຢາຮຽກຮ້ອງໃຫ້ມີການຄາດຄະເນ ປະລິມານຄວາມຕ້ອງການຢ່າງເໝາະສົມ ເພື່ອ ສັ່ງຊື້ ແລະ ເຊັ່ນດຽວກັນຕ້ອງເປັນຢາທີ່ຖືກຕ້ອງກັບການລະບາດ ຂອງພະຍາດ ຂອງປະຊາຊົນ. ການສະໜອງຢາ ແມ່ນ ຂະບວນການໃນການໄດ້ຢາມາຈາກຜູ້ສະໜອງຈາກພາກລັດ, ເອກະຊົນ ແລະ/ຫລື ໂດຍຜ່ານແຫລ່ງສະໜອງຕ່າງໆ ເຊັ່ນ ໂຮງງານຜະລິດຢາ, ຜູ້ແຈກຢາຍຢາ ແລະ ອົງການຕ່າງໆການສະໜອງຢາທີ່ດີ ແມ່ນຂະບວນການ ທີ່ ສະລັບຊັບຊ້ອນ ຊຶ່ງຮັບປະກັນການມີຢາທີ່ຖືກຕ້ອງ, ໃນປະລິມານ ທີ່ເໝາະສົມ, ໃນລາຄາທີ່ຕໍ່າສຸດ, ໃນເວລາທີ່ຖືກຕ້ອງ ແລະໃນມາດຕະຖານຄຸນນະ ພາບທີ່ຮັບຮອງໄດ້.

## ມີຄວາມຕ້ອງການພະນັກງານວິຊາການທີ່ມີຄວາມສາມາດເພື່ອຮັບປະກັນການປະຕິບັດທີ່ມີຈັນຍາບັນ

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ແຕ່ງຕັ້ງພະນັກງານທີ່ມີຄວາມຊຳນິຊຳນານດ້ານວິຊາການຢ່າງເຫມາະສົມ ໂດຍລະບົບຄຸນຄວາມດີ | - ມີການຮັບຮູ້ຄຸນຄວາມດີ<br>- ການບໍລິການທີ່ມີປະສິດທິຜົນ ແລະ ປະສິດທິພາບ ຕໍ່ຜົນປະໂຫຍດຂອງມວນຊົນ |
| ພະນັກງານຕ້ອງມີຄວາມສັດຊື່ ແລະ ບໍ່ມີຜົນປະໂຫຍດສ່ວນຕົວ | - ມີການແຈ້ງ ການບໍ່ຫຍຸ້ງກ່ຽວ ກັບ ຜົນປະໂຫຍດ ສ່ວນຕົວ COI<br>- ການລາຍງານມີຄວາມຊື່ສັດ ແລະ ເປັນຈິງ<br>- ມີຄວາມໂປ່ງໃສ<br>- ມີຫລັກການ ດ້ານກົດຫມາຍ |
| ຕອບສະຫນອງ ປັດໃຈການ ຊຸກຍູ້ ແລະ ມີ ເງິນເດືອນທີ່ເຫມາະສົມ | - ມີ ການຮັບຮູ້ຄຸນຄວາມດີ ແລະ ສະຫນອງຄ່າແຮງງານທີ່ເຫມາະສົມ |

## ມີຄວາມຕ້ອງການນະໂຍບາຍທີ່ຈະແຈ້ງ ກ່ຽວກັບວິທີການຄິດໄລ່ປະລິມານຄວາມຕ້ອງການ ເພື່ອຈຳກັດຜົນປະໂຫຍດຂອງບຸກຄົນ ແລະ/ຫລື ກຸ່ມຄົນ ຈາກການຄາດຄະເນສູງ

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ສະຫນອງຢາທີ່ມີປະສິດທິຜົນດີສຸດ ໃນຈຳນວນທີ່ຖືກຕ້ອງ | - ມີການຕັດສິນໃຈ ທີ່ອີງໃສ່ຂໍ້ມູນທີ່ຈະແຈ້ງ |
| ຮັບປະກັນຄຸນຄ່າຂອງເງິນ | - ມີຄວາມຮັບຜິດຊອບຈະແຈ້ງ |

**ມີຄວາມຕ້ອງການຂັ້ນຕອນທີ່ຊຽນອອກຢ່າງຈະແຈ້ງ ແລະ ພັນລະນາຂັ້ນຕອນ ແລະ ເງື່ອນໄຂການສະໜອງເພື່ອປະກອບໃຫ້ແກ່ການສັນຍາ ແລະ ມີໄວ້ໃຫ້ມວນຊົນຕາມັນິຕິຊົນ**

| ນະໂຍບາຍ ແລະ ຂັ້ນຕອນ ຕ່າງໆ | ຫລັກການຈັນຍາບັນທີ່ກ່ຽວຂ້ອງ |
|---|---|
| ຂັ້ນຕອນການສະໜອງຢາທີ່ມີຄວາມໂປ່ງໃສ | - ມີ ຄວາມໂປ່ງໃສ |
| ການແບ່ງຄວາມຮັບຜິດຊອບລະຫວ່າງບຸກຄົນຕ່າງໆ | - ມີຄວາມຮັບຜິດຊອບ<br>- ມີການແຈ້ງ ການບໍ່ຫຍຸ້ງກ່ຽວ ກັບ ຜົນປະໂຫຍດ ສ່ວນຕົວ COI |
| ການສະໜອງ ແບບແຂ່ງຂັນ | - ລະບຽບ ຂອງກົດໝາຍ<br>- ມີການຕັດສິນໃຈ ທີ່ອີງໃສ່ຂໍ້ມູນ ທີ່ຈະແຈ້ງ<br>- ມີສິດທີເທົ່າທຽມກັນ ແລະ ໂອກາດຄືກັນ |
| ຄັດເລືອກເອົາຜູ້ສະໜອງທີ່ໜ້າເຊື່ອຖື | - ມີການຕັດສິນໃຈ ທີ່ອີງໃສ່ຂໍ້ມູນ ທີ່ຈະແຈ້ງ<br>- ມີ ການຮັບຮູ້ຄຸນຄວາມດີ ແລະ ສະໜອງຄ່າແຮງງານທີ່ເໝາະສົມ |
| ຕິດຕາມການເຄື່ອນໄຫວຂອງຜູ້ສະໜອງ ເພື່ອຮັບປະກັນການນຳສົ່ງທີ່ທັນເວລາ | - ລະບຽບຂອງກົດໝາຍ<br>- ມີການຕັດສິນໃຈ ທີ່ອີງໃສ່ຂໍ້ມູນ ທີ່ຈະແຈ້ງ<br>- ມີຄວາມຮັບຜິດຊອບຈະແຈ້ງ |

**ຕົວຢ່າງຂອງການປະຕິບັດທີ່ບໍ່ມີຄວາມໂປ່ງໃສ:**

ຜູ້ສະໜອງອາດຊື້ຈ້າງພະນັກງານລັດ ເພື່ອໄດ້ຮັບສິດພິເສດໃນຂັ້ນຕອນການປະມູນ

# Ethical Framework for Good Governance in the Pharmaceutical Sector, in Lao PDR

**September 2010**

## Preface

The guideline on Ethical framework of pharmaceutical sector is the first edition, which has been developed by the Ministry of Health, based on the World Health Organization guidelines. The Food and Drug Department has been the core organization responsible for the development of guideline in cooperation with the concerned institutions and ethical committee with in Ministry of Health. With the concerns of the Government of Lao PDR to the treatment and healthcare for ethnic diversity of Laos, to ensure in offering of good quality, safety and affordable price of drug, which be based on the National Drug Policy and law on drug and medical product.

On behalf of the Minister of Health, I would like to congratulate to the Food and Drug Department as well as all ethical committee members for their hard work in contributing to finalise the updated guideline.

This guideline is very important to the management of pharmaceutical sector in Lao PDR especially in the field of drug selection, drug registration and drug procurement; the guideline will support and stimulate responsible persons to be more accountable for avoiding unethical practices of all matters, to increase confidence to government services in general public leading to more effectiveness, in order to ensure the procurement of good quality, efficacious, and safe drugs with affordable price for Lao people when needed.

This guideline composes of key elements such as what is a corruption, basic strategies to apply in the public sector to solve the problem, specific case of the pharmaceutical sector, types of unethical behavior, impact on health system and health status, application of moral and ethical framework to the pharmaceutical sector, moral values and ethical principles and the socialization of an ethical framework as well as examples to guide how to implement. I hope that this guideline will be disseminated and applied into the practices especially to be introduced as a curriculum for teaching at the Health Science University and all health schools in different levels to increase knowledge and build up the perceptions of health students on the ethical framework to promote the moral and spiritual renewal needed for the transformation of society.

